Exploring God's Word

# ການສຶກສາພຣະຄັມຂອງພຣະເຈົ້າ



ສຶກສາ
ພຣະຄັມ
ພີທີ່ບ້ານ

“ທ່ານທັງສອງຈຶ່ງໄດ້ກ່າວພຣະທັມຂອງພຣະຜູ້ເປັນເຈົ້າ ໃຫ້ທັມມະໂຮງກັບຄົວເຮືອນທຸກຄົນຂອງທ່ານຟັງ.” ***ກິຈການ 16:32***

“...ເພາະເຂົາມີໃຈເຫລື້ອມສັຍຮັບເອົາພຣະທັມ ແລະຄົ້ນເບິ່ງພຣະຄັມພີທຸກວັນ...” ***ກິຈການ 17:11***

# ການສຶກສາພຣະຄັມຂອງພຣະເຈົ້າ


ບົດຮຽນທີ່ 1

ບົດຮຽນທີ່ 2

ບົດຮຽນທີ່ 3

ບົດຮຽນທີ່ 4

ບົດຮຽນທີ່ 5

ບົດຮຽນທີ່ 6

ບົດຮຽນທີ່ 7

ບົດຮຽນທີ່ 8

ບົດຮຽນທີ່ 9

ບົດຮຽນທີ່ 10

ບົດຮຽນທີ່ 11

ບົດຮຽນທີ່ 12




# ການສຶກສາພຣະຄັມຂອງພຣະເຈົ້າ




## ບົດຮຽນທີ່ ໜຶ່ງ

# ການ ແນະ ນຳ ເຖິງ ພຣະ ທັມ ຄັມ ພີ ເດີມ
# ເລີ້ມ ຕົ້ນ ເວ ລາ

## ບໍ່ມີຄວາມຜິດບາບ




## ຮູ້ສຶກສຳນຶກ




## ຜູ້ອາວຸໂສສູງສຸດ




## ພຣະບັນຍັດແລະຜູ້ທຳນາຍ



# ພຣະ ທັມ ຄັມ ພີ ເດີມ

***32 ນັກຂຽນ***
***ກວ່າ 3,600 ປີ ຊົ່ວອາຍຄົນ***
***1,500 ປີ ໃນການຂຽນ***

> ເພາະວ່າຄຳທຳນວາຍນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າ ຕາມທີ່ພຣະວິນຍານບໍຣິສຸດຊົງດົນໃຈ
> **II ເປໂຕ 1:21**






ບໍ່ມີຄວາມຜິດບາບ
ຮູ້ສຶກສຳນຶກ
ຜູ້ອາວໂສສູງສຸດ
ພຣະບັນຍັດ

ເລີ້ມ ຕົ້ນ ເວ ລາ

# ເມື່ອ ພຣະ ເຈົ້າ ເລີ້ມ ຕົ້ນ ນິ ລະ ມິດ ສ້າງ




**1**
ຄວາມສວ່າງ
ແລະ ແຍກ
ຄວາມສວາງ
ອອກຈາກມືດ

**2**
ທ້ອງຟ້າ
ການແຍກນໍ້າ
ອອກຈາກກັນ

**3**
ແຜ່ນດິນໂລກ
ຫຍາ
ຜັກ
ຕົ້ນໄມ້

**4**
ດວງຕາເວັນ
ດວງຈັນ
ດວງດາວ. ວັນ
ລະດູ. ປີ

**5**
ສັດນໍ້າ
ໃນທະເລ.
ສັດປີກໃນ
ທອງຟາ

**6**
ສັດຕ່າງໆ
ແລະ
ມະນຸດ

**7**
ພຣະເຈົ້າໄດ້
ຢຸດກິຈການທັງໝົດ
(ພັກຜອນ)

# ການ ນິ ລະ ມິດ ສ້າງ

# ສິດ ທິ ໃນ ການ ເລືອກ

ອາດາມແລະເອວາ



ໃນເວລາທີ່ບໍ່ມີຄວາມຜິດບາບ ປະຖົມການ 2:25

ມະນຸດເລືອກເອົາຄວາມຜິດບາບ ປະຖົມການ 3:1-8



ຄວາມຜິດບາບ
ແຍກມະນຸດ
ອອກຈາກພຣະເຈົ້າ

*“ເວັ້ນໄວ້ແຕ່ກົກທີ່ໃຫ້ຮູ້ຈັກຄວາມ ດີແລະຊົ່ວເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກ ໄມ້ໃນກົກນີ້ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ.*

ປະຖົມການ **2:17**



**ມະນຸດຕົກຢູ່ໃນຄວາມບາບ**

# ການ ຕັດ ສິນ ລົງ ໂທດ ຄັ້ງ ທຳ ອິດ



*ຄຳສັນຍາ*

“ເຈົ້າກັບແມ່ຍິງຈະຕ້ອງກຽດຊັງກັນ ມະ
ນຸດແລະງູຈະຕ້ອງເປັນສັດຕູກັນ ມະນຸດ
ຈະພຍາຍາມຢຽບຫົວເຈົ້າໃຫ້ແຕກ ແລະ
ເຈົ້າກໍ່ຈະພຍາຍາມຕອດສົ້ນຫນ່ອງຂອງ
ພວກເຂົາ” ປະຖົມການ **3:15**

## ຄຳສາບແຊ່ງ 4 ຂໍ້

ປະຖົມການ **3:15-19**

1. ສາບແຊ່ງ ຜີມານ
2. ສາບແຊ່ງ ຜູ້ຍິງ
3. ສາບແຊ່ງ ແຜ່ນດິນ
4. ສາບແຊ່ງ ຜູ້ຊາຍ




ບົດຮຽນທີ່ ສອງ

# ຕັ້ງແຕ່ມະນຸດຕົກຢູ່ໃນຄວາມຜິດບາບເຖິງນໍ້າຖ້ວມ

## ເວົ່ ລາ ແຫ່ງ ການ ຮູ້ ສຶກ ສຳ ນຶກ

ອາດາມ

ອາເບັນ

ກາອິນ



ເຄື່ອງຖວາຍທີ່ຖືກຕ້ອງ

ເຄື່ອງຖວາຍທີ່ບໍ່ຖືກຕ້ອງ

**ປະຖົມການ 4:3-7**

**ອາເບັນ** **ເຊັດ**

*"ຕັ້ງແຕ່ເວລານັ້ນມາມະນຸດໄດ້ເລີ້ມຕົ້ນ ນະມັສການອອກພຣະນາມພຣະຜູ້ເປັນເຈົ້າ"*

**ປະຖົມການ 4:26**



*"ເອໂນກໄດ້ຕິດຕາມພຣະເຈົ້າໄປຈົນ ຊົ່ວຊີວິດ ແລ້ວພຣະອົງກໍ່ໄດ້ຮັບເອົາເຂົາ..."*

**ປະຖົມການ 5:24**

ເມື່ອພຣະຜູ້ເປັນເຈົ້າເຫັນວ່າ ມະນຸດໂຫດ ຮ້າຍສາມານມີຢູ່ທຸກຫົນທຸກແຫ່ງ ແລະ ຄວາມຄິດຊົ່ວກໍ່ບັງຄັບຈິດໃຈເຂົາຢູ່ທຸກ ເວລາ ພຣະອົງຈຶ່ງເສັຽພຣະທັຍຫລາຍ ແລະມີຄວາມກິນແໜງຢ່າງຍິ່ງໃຫຼ່ທີ່ ໄດ້ສ້າງພວກເຂົາຂຶ້ນມາຢູ່ໃນໂລກນີ້

**ປະຖົມການ 5:5-6**



ແຕ່ພຣະຜູ້ເປັນເຈົ້າຊົງພໍພຣະ ທັຍນໍາໂນອາເທົ່ານັ້ນ

***ປະຖົມການ* 6:8**

# ຄອບຄົວທີ່ຍຸດຕິທັມຖືກປົກປັກຮັກສາໄວ້

ການສ້າງນາວາ
ປະຖົມການ 6:14-16



ລັກສະນະຂອງນາວາ

1 ປະຕູ
2 ຊັ້ນ
ຍາວ 133 ແມັດ
ສູງ 13 ແມັດ
ກ້ວາງ 22 ແມັດ

ກໍຊົງກ່າວວ່າ, "ເຮົາຈະບໍ່ອະນຸຍາດໃຫ້ມະນຸດມີຊີວິດຕລອດໄປເປັນນິດ
ພຣະອົງຈຶ່ງກ່າວວ່າ, "ເຮົາຈະທຳລາຍມະນຸດທຸກໆຄົນທີ່ເຮົາໄດ້ສ້າງຂຶ້ນແລ້ວໃນທຸກຫົນທຸກແຫ່ງ ເຮົາຈະທຳລາຍຝູງສັດ ແລະຝູງນົກຕ່າງໆ ເພາະວ່າເຮົາເສັງໃຈທີ່ໄດ້ສ້າງມັນມາ"

**ປະຖົມການ 6:3,7**

ຄຳສັນຍາຂອງ
ຮຸ້ງກິນນ້ຳ
**ປະຖົມການ 9:11-13**




ພຣະເຈົ້າບໍ່ໄດ້ຊົງຍົກເວັ້ນມະນຸສໂລກຄາວບູຮານ ແຕ່ໄດ້ຮັກສາໂນອາຜູ້ປະກາດຄວາມຊອບທັມກັບຄົນອື່ນອີກເຈັດຄົນ ເມື່ອຄາວທີ່ພຣະອົງໄດ້ຊົງບັນດານໃຫ້ນ້ຳຖ້ວມໂລກຂອງຄົນທີ່ບໍ່ນັບຖືພຣະເຈົ້າ

**II ເປໂຕ 2:5**

# ມະ ນຸດ ໄດ້ ຖືກ ຕັດ ສິນ ລົງ ໂທດ

ດ້ວຍວ່າສະໄຫມຂອງໂນເອໄດ້ເປັນ
ຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະ
ເປັນຢ່າງນັ້ນ
ເພາະວ່າເມື່ອກ່ອນວັນນ້ຳຖ້ວມນັ້ນ ຄົນ
ທັງຫລາຍໄດ້ກິນແລະດື່ມ ໄດ້ແຕ່ງງານ
ແລະຍົກໃຫ້ເປັນຜົວເມຍກັນ ຈົນເຖິງວັນ
ທີ່ໂນເອໄດ້ເຂົ້າໄປໃນນາວາ
ແລະນ້ຳໄດ້ມາຖ້ວມກວາດເຂົາໄປໂດຍບໍ່
ທັນຮູ້ຕົວຢ່າງໃດ ເມື່ອບຸດມະນຸດສະເດັດ
ມາກໍຈະເປັນຢ່າງນັ້ນ
ເມື່ອນັ້ນຈະມີຊາຍສອງຄົນຢູ່ທີ່ທົ່ງນາ ຈະ
ຊົງຮັບຄົນນຶ່ງໄປ ຈະຊົງປະຄົນນຶ່ງໄວ້ ຈະມີ
ຍິງສອງຄົນກຳລັງໂມ້ແປ້ງຢູ່ທີ່ໂຮງໂມ້ ຈະ
ຊົງຮັບຄົນນຶ່ງໄປ ຈະຊົງປະຄົນນຶ່ງໄວ້
ເຫດສັນນັ້ນພວກທ່ານຈົ່ງເຝົ້າລະວັງຢູ່
ເພາະພວກທ່ານບໍ່ຮູ້ວ່າ ອົງພຣະຜູ້ເປັນ
ເຈົ້າຂອງພວກທ່ານຈະສະເດັດມາເວລາ
ໃດ
ແຕ່ຈົ່ງເຂົ້າໃຈຢ່າງນີ້ວ່າ ຖ້າເຈົ້າຂອງ
ເຮືອນໄດ້ຮູ້ກ່ອນວ່າໂຈນຈະມາຍາມໃດ
ຕົນຈະເຝົ້າລະວັງບໍ່ໃຫ້ໂຈນເຈາະເຂົ້າ
ເຮືອນໄດ້
ເຫດສັນນັ້ນພວກທ່ານກໍເຫມືອນກັນ
ຈົ່ງຕຽມຕົວໄວ້ໃຫ້ພ້ອມ ເພາະໃນໂມງທີ່
ພວກທ່ານບໍ່ທັນຄິດນັ້ນ ບຸດມະນຸດຈະສະ
ເດັດມາ”

**ມັດທາຍ 24:37-44**



| ສະມັຍຂອງໂນອາ | ສະມັຍຂອງບຸດມະນຸດ |
|---|---|
| ປະຖົມການ 6:5, 11 | |
| ງານກິນລ້ຽງ | ຟີລິບປອຍ 3:17-19 |
| ການສົມລົດແລະການໃຫ້ສົມລົດ | ມັດທາຍ 24:38-39 |
| ພວກເຂົາ ຊື້, ຂາຍ, ປູກຝັງ, ກໍ່ສ້າງ | ລູກາ 17:26-30 |
| ລະເລີຍເຖິງການຈະຖືກລົງໂທດ | ລູກາ 21:34-35 |
| ຄວາມຊົ່ວຊ້າອັນຮ້າຍແຮງ | II ຕີໂມທຽວ 3:1-4 |
| ນ້ຳຖ້ວມເກີດຂຶ້ນ | II ເປໂຕ 3:3-7 |

# ການສຶກສາພຣະຄັມຂອງພຣະເຈົ້າ



ສຶກສາ
ພຣະຄັມ
ພີທີ່ບ້ານ

ບົດຮຽນທີ່ ສາມ

# ພາສາດັ້ງເດີມ /ການເລີ້ມຕົ້ນປະເທດຊາດ

"ຕໍ່ໄປນີ້ແມ່ນເຊື້ອສາຍບຸດຊາຍທັງ
ຫລາຍຂອງໂນອາຄື ເຊມ ຮາມ ແລະຢາ
ເຟດ ບຸດຊາຍຂອງເຂົາໄດ້ເກີດຫລັງ
ຈາກນໍ້າ ຖ້ວມໂລກ"

ປະຖົມການ 10:1









"ແລ້ວພຣະອົງຈຶ່ງສະເດັດລົງມາ
ທອດພຣະເນດເມືອງແລະຫໍຄອຍສູງທີ່
ມະນຸດໄດ້ສ້າງຂຶ້ນ

ພຣະອົງຊົງກ່າວວ່າ, "ບັດນີ້ ມະນຸດ
ທ້ອນໂຮມກັນເປັນອັນນຶ່ງອັນດຽວ ເຂົາ
ເວົ້າພາສາດຽວກັນ ນີ້ກໍເປັນພຽງຂັ້ນ
ເລີ່ມຕົ້ນທີ່ເຂົາໄດ້ກະທຳມາ ໃນຂັ້ນຕໍ່ໄປ
ພວກເຂົາກໍຈະສາມາດທຳທຸກສິ່ງທຸກ
ຢ່າງທີ່ເຂົາປາຖນາຢາກທຳ

ສະນັ້ນ ເຮົາຕ້ອງລົງໄປທຳໃຫ້ພາສາ
ຂອງເຂົາແຕກຕ່າງກັນ ເພື່ອພວກເຂົາ
ຈະເວົ້າບໍ່ເຂົ້າໃຈກັນອີກ"

ແລ້ວພຣະຜູ້ເປັນເຈົ້າຊົງທຳໃຫ້ພວກ
ເຂົາພັດພາກຈາກກັນໄປຢູ່ທົ່ວທຸກແຫ່ງ
ໃນໂລກ ພວກເຂົາຈຶ່ງເຊົາສ້າງເມືອງນັ້ນ

ດ້ວຍເຫດນັ້ນ ເມືອງນີ້ຈຶ່ງມີຊື່ວ່າ ບາ
ເບນ ເພາະວ່າບ່ອນນີ້ເປັນບ່ອນທີ່ພຣະ
ຜູ້ເປັນເຈົ້າໄດ້ຊົງທຳໃຫ້ພາສາຂອງພວກ
ເຂົາແຕກຕ່າງກັນ ແລະທຳໃຫ້ມະນຸດ
ພັດພາກຈາກກັນໄປທົ່ວທຸກແຫ່ງໃນ
ໂລກ

*ປະຖົມການ* **11:5-9**

# ຊາດ ທີ່ ເລືອກ ໄວ້

## ສະ ມັຍ ຂອງ ຜູ້ ອາ ວຸ ໂສ ສູງ ສຸດ

ພຣະເຈົ້າຊົງເອີ້ນອັບຣາຮາມ

"ຄັນຕໍ່ມາ ພຣະຜູ້ເປັນເຈົ້າໄດ້ຊົງບອກ
ແກ່ອັບຣາມວ່າ, "ຈົ່ງອອກຈາກປະເທດຂອງ
ເຈົ້າ ຈາກຍາດພີ່ນ້ອງແລະຈາກບ້ານຂອງ
ເຈົ້າແລ້ວໄປໃນປະເທດທີ່ເຮົາຈະບອກເຈົ້າ
ເຮົາຈະໃຫ້ເຈົ້າມີເຊື້ອສາຍຫລາຍຂຶ້ນແລ້ວ
ເກີດເປັນຊົນຊາດໃຫຍ່ ເຮົາຈະອວຍພອນ
ໃຫ້ເຈົ້າເປັນຜູ້ທີ່ມີຊື່ສຽງ ແລະຜູ້ອື່ນຈະໄດ້
ຮັບພອນຍ້ອນເຈົ້າ
ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າ ແຕ່
ເຮົາຈະສາບແຊ່ງຜູ້ທີ່ສາບແຊ່ງເຈົ້າ ທຸກໆ
ຊົນຊາດໃນໂລກຈະຂໍໃຫ້ເຮົາອວຍພອນ
ພວກເຂົາເຫມືອນດັ່ງເຮົາໄດ້ອວຍພອນໃຫ້
ພວກເຈົ້າ"

**ປະຖົມມະການ 12:1-3**

*ຄໍາສັນຍາ*

ຄໍາໝັ້ນສັນຍາແຫ່ງ
ການເຮັດພິທີຕັດ—
ປະຖົມມະການ 17:10-14

ອິສມາເອນເກີດ
ປະຖົມມະການ 16:15
ຊາດອາຣັບ

ອີຊາກເກີດ

"ພຣະຜູ້ເປັນເຈົ້າຊົງໂຜດຊ່ວຍໃຫ້
ນາງຊາຣາຕາມທີ່ພຣະອົງຊົງສັນຍາໄວ້
ນາງໄດ້ຕັ້ງທ້ອງແລະໄດ້ບຸດຊາຍຜູ້ນຶ່ງ
ໃຫ້ອັບຣາຮາມ ເມື່ອທ່ານເຖົ້າແກ່
ແລ້ວ ,ເດັກນ້ອຍນັ້ນໄດ້ເກີດຕາມ
ເວລາທີ່ພຣະເຈົ້າໄດ້ຊົງບອກໄວ້
ອັບຣາຮາມໃສ່ຊື່ບຸດນັ້ນວ່າ ອີຊາກ

**ປະຖົມມະການ 21:1-3**

ໂລດແລະອັບຣາຮາມ
ແຍກທາງ
ປະຖົມມະການ 13:8-13



ຄອບຄົວໂລດໜີອອກຈາກໂຊໂດມ
ປະຖົມມະການ 19:1-28



ອັບຣາຮາມຖວາຍອີຊາກເປັນເຄື່ອງບູຊາ
ປະຖົມມະການ 22:1-14

# ຊາດ ທີ່ ເລືອກ ໄວ້


ປະຖົມການ 25:21-26
ອີຊາກ
ເອຊາວ
ຢາໂຄບ
ຢາໂຄບຫຼອກລວງເອົາ
ພຣະພອນ
ປະຖົມການ 27:26-33
“ສ່ວນເຂົາເອງຍັງຄ້າງຢູ່ຟາກນ້ຳພຸ້ນ
ຄືນດຽວ
ແລ້ວມີຊາຍຄົນນຶ່ງໄດ້ຕໍ່ສູ້ກັບເຂົາຈົນ
ຮອດຮຸ່ງເຊົ້າ ຂນະທີ່ກຳລັງຕໍ່ສູ້ກັນ ຊາຍຜູ້
ນັ້ນເຫັນວ່າຕົນຈະບໍ່ຊະນະຢາໂຄບ ຈຶ່ງຕີ
ແອວຂອງເຂົາຈົນພິກໂບກ
ຊາຍຜູ້ນັ້ນເວົ້າວ່າ, “ປ່ອຍໃຫ້ເຮົາໄປເສັງ
ເພາະຕາເວັນກໍກຳລັງຈະຂຶ້ນແລ້ວ” ແຕ່
ຢາໂຄບຕອບວ່າ, “ຂ້າພະເຈົ້າຈະບໍ່ປ່ອຍ
ທ່ານໄປ ຈົນກວ່າທ່ານຈະອວຍພອນໃຫ້
ຂ້າພະເຈົ້າ”
ຊາຍຄົນນັ້ນຈຶ່ງຖາມວ່າ, “ເຈົ້າຊື່ຫຍັງ?”
ຢາໂຄບຕອບວ່າ, “ຂ້າພະເຈົ້າຊື່ຢາໂຄບ”
ທ່ານເວົ້າຕື່ມອີກວ່າ, “ຊື່ຂອງເຈົ້າຈະບໍ່
ແມ່ນຢາໂຄບອີກ ເພາະວ່າເຈົ້າໄດ້ຕໍ່ສູ້ກັບ
ພຣະເຈົ້າແລະມະນຸດ ແລະໄດ້ຊະນະ ດັ່ງ
ນັ້ນ ເຈົ້າຈະມີຊື່ໃຫມ່ວ່າ ອິສຣາເອນ”
ປະຖົມການ 32:24-27
ຢາໂຄບຝັນເຫັນສວັນ
ປະຖົມການ 28:10-22
ຄຳສັນຍາ
ຢາໂຄບຊື້ສິດທິອ້າຍກົກ
ປະຖົມການ 25:29-34
ຢາໂຄບໄດ້ຊື່ໃໝ່ ອິສຣາເອນ

# ຊາດ ທີ່ ເລືອກ ໄວ້

ລູກຊາຍຂອງຢາໂຄບ
(ສິບສອງຕະກຸນຂອງ
ອິສຣາເອນ)

ລູເບັນ
ຊີເມໂອນ
ເລວີ
ຢູດາ
ເສບູໂລນ
ອິສຄາ
ດານ
ກາດ
ອາເຊ
ເນັບທະລີ
ໂຢເຊັບ < ເອຟະລາອິມ, ມານາເຊ
ເບັນຢາມິນ

ປະຖົມການ 48:5-6
ປະຖົມການ 49:3-27



ອ້າຍຂອງລາວໄດ້ຂາຍ ໂຢເຊັບ
ປະຖົມການ 37:12-28






ໂຢເຊັບຖືກຂັງຢູ່ຄຸກ
ປະຖົມການ 39

ໂຢເຊັບແກ້ຄວາມຝັນ
ຂອງກະສັດ
ປະຖົມການ 41

ໂຢເຊັບຍົກໂທດໃຫ້ອ້າຍນ້ອງຂອງເພິ່ນ

"ບັດນີ້ ຢ່າໄດ້ກະວົນກະວາຍໃຈ ຫລື
ຕິຕຽນເອງທີ່ຂາຍຂ້ອຍມາທີ່ນີ້ ແມ່ນພຣະ
ເຈົ້າແທ້ໆທີ່ໃຊ້ຂ້ອຍມາທີ່ນີ້ກ່ອນ ເພື່ອ
ຊ່ອຍເຫລືອຊີວິດພວກເຈົ້າ

ປະຖົມການ 45:5

ຊາວອິສຣາເອນຕັ້ງຖິ່ນ
ຖານທີ່ເມືອງໂກເຊນ
ປະຖົມການ 47:11-12

ຊາວອິສຣາເອນ
ຕົກເປັນທາດ
ອົບພະຍົບ 1:8-14




# ບົດຮຽນທີ່ ສີ່

# ການ ອົບ ພະ ຍົບ

## ແຜ່ນ ການ ແຫ່ງ ການ ປົດ ປ່ອຍ ໃຫ້ ພົ້ນ

" ເຮົາລົງມາຊ່ອຍເຂົາໃຫ້ພົ້ນ ຈາກເງື້ອມມືຂອງຊາວເອຢິບ ເພື່ອ ນຳພາພວກເຂົາໄປຍັງແຜ່ນດິນອັນ ອຸດົມສົມບູນແລະກວ້າງຂວາງ ຄື ແຜ່ນດິນຂອງຊາວການາອານ, ຊາວຮິດຕີ, ຊາວອາໂມຣິດ, ຊາວເປ ຣິສຊີ, ຊາວຮີວີ, ແລະຊາວເຢບຸສ "

ປະຖົມການ **3:8**

ຄຳສັນຍາ



**ໂມເຊ ແລະ ໄຟທີ່ພຸ່ມໄມ້**

ອົບພະຍົບ 3:1-10



**ໂມເຊເກີດ**

ອົບພະຍົບ 2:2-10



**ໂມເຊຢູ່ຕໍ່ໜ້າກະສັດຟາໂຣ**

**ສິບໂຣກລະບາດ**

ນ້ຳກາຍເປັນເລືອດ
ຝູງກົບ
ຝູງຮິ້ນ
ຝູງເຫຼືອກ
ຝູງສັດຕາຍ
ຕຸ່ມຝີ
ໝາກເຫັບ
ຝູງຕັກແຕນ
ຄວາມມືດ
ລູກກົກຊາວອີຢິບຖືກຂ້າ



**ເລືອດທີ່ໂຕ້ງປະຕູ**

ອົບພະຍົບ 12:1-36



**ຂ້າມຜ່ານທະເລແດງ**

ອົບພະຍົບ 14:13-31

# ຊາວ ອິສ ຣາ ເອນ ທີ່ ຊີ ນາຍ

## ພຣະ ເຈົ້າ ປະ ທານ ພຣະ ບັນ ຍັດ






**ພຣະບັນຍັດ**
**10 ປະການ**
ອົບພະຍົບ 25:8

ແລ້ວໃຫ້ເຂົາສ້າງສະຖານນະມັສການຖວາຍແກ່ເຮົາ ເພື່ອວ່າເຮົາຈະໄດ້ຢູ່ຖ້າມກາງພວກເຂົາ
ແບບຢ່າງຫໍເຕັນສັກສິດ ແລະເຄື່ອງທັງປວງຂອງຫໍເຕັນສັກສິດນັ້ນ ເຈົ້າຈົ່ງທຳຕາມທີ່ເຮົາແຈ້ງໄວ້ແກ່ເຈົ້ານີ້ທຸກ
**ອົບພະຍົບ 25:8-9**

ວົນວຽນຢູ່ທີ່ຖິ່ນ
ແຫ້ງແລ້ງ
**40 ປີ**





# ຫໍ ເຕັນ ສັກ ສິດ

## ມະ ນຸດ ເຂົ້າ ຫາ ພຣະ ເຈົ້າ




ປະການນີ້, ປະໂຣຫິດເຫລົ່ານັ້ນບໍລະ
ບັດເປັນແຕ່ແບບແລະເງົາແຫ່ງສິ່ງສັກ
ສິດໃນສວັນເຫມືອນໂມເຊ, ເມື່ອທ່ານ
ຈະຕັ້ງສຳນັກຜ້ານັ້ນ ພຣະເຈົ້າໄດ້ຊົງ
ເຕືອນສະຕິທ່ານວ່າ, "ດັ່ງນີ້, ເຈົ້າຕ້ອງ
ເຮັດທຸກສິ່ງຕາມແບບຢ່າງທີ່ເຮົາໄດ້ສະ
ແດງແກ່ເຈົ້າເທິງພູນັ້ນ" **ເຮັບເຣີ 8:5**

### ແບບຢ່າງ ແລະ ເງົາ

**I ໂກຣິນໂທ 10:11**
**ໂກໂລຊາຍ 2:16-17**
**ເຮັບເຣີ 8:5**
**ເຮັບເຣີ 9:8-9, 24**
**ເຮັບເຣີ 10:1**
**I ເປໂຕ 3:21**

### ຂະນາດຂອງຫໍເຕັນສັກສິດ

ສູງ **10** ສອກ ( **4,5** ແມັດ )
ກວ້າງ **10** ສອກ ( **4,5** ແມັດ )
ຍາວ **30** ສອກ ( **13,5** ແມັດ )

# ແທ່ນ ຖວາຍ ບູ ຊາ

Not to Scale



ປະໂລຫິດເຂົ້າໄປຫໍເຕັນສັກສິດໂດຍທາງ
ແທ່ນທອງເຫລືອງ ບ່ອນທີ່ເພິ່ນຖວາຍ
ເຄື່ອງບູຊາເພື່ອຄວາມຜິດບາບ

ເພາະວ່າຊີວິດຂອງເນື້ອໜັງຢູ່ໃນເລືອດ ເຮົາໄດ້ໃຫ້ເລືອດແກ່ເຈົ້າເພື່ອໃຊ້ເທິງແທ່ນ ເພື່ອຈະທຳການລົບມົນທິນບາບແຫ່ງວິນຍານຈິດຂອງເຈົ້າ ເພາະວ່າໂລຫິດເປັນສິ່ງທີ່ທຳການລົບມົນທິນບາບ ດ້ວຍຊີວິດເປັນເຫດ.

ລະບຽບພວກເລວີ 17:11

ພຣະເຢຊູຄຣິສເປັນເຄື່ອງບູຊາທີ່
ສົມບູນແກ່ພວກເຮົາ

ລ່ວງໄປວັນນຶ່ງໂຢຮັນໄດ້ເຫັນພຣະເຢຊູກຳລັງສະເດັດມາຫາ ທ່ານຈຶ່ງກ່າວວ່າ, "ເບິ່ງແມ໋, ພຣະເມສານ້ອຍຂອງພຣະເຈົ້າຜູ້ຊຶ່ງຮັບເອົາຄວາມຜິດບາບຂອງມະນຸດໂລກໄປເສັຽ

ໂຢຮັນ 1:29



ແທ່ນທອງເຫລືອງ

ບ່ອນຖວາຍເຄື່ອງບູຊາ
ຄວາມຕາຍ
ເລືອດຕົກ

# ອ້າງ ລ້າງ

Not to Scale



ປະໂຣຫິດຈຳເປັນຕ້ອງລ້າງທີ່ບ່ອນ
ອ່າງລ້າງກ່ອນເຮັດວິທີ ທີ່ແທ່ນບູຊາ
ຫລື ເຂົ້າໄປໃນຫໍສັກສິດ.

ເມື່ອເຂົາຈະເຂົ້າໄປໃນເຕັນນັດ
ພົບ ເຂົາຈະຕ້ອງຊຳຮະດ້ວຍນ້ຳເພື່ອ
ຈະບໍ່ຕາຍ ເມື່ອເຂົາເຂົ້າມາໃກ້ແທ່ນ
ທຳການບົວລະບັດ ຄືຖວາຍເຄື່ອງບູ
ຊາດ້ວຍໄຟແດ່ພຣະຜູ້ເປັນເຈົ້າ

*ອົບພະຍົບ* **30:20**

ທີ່ອ່າງທອງເຫລືອງເປັນບ່ອນລ້າງ
ເໝືອນກັບການຮັບບັບຕິສະມາ ເພື່ອ
ລົບລ້າງຄວາມຜິດບາບ

ບັດນີ້ເຈົ້າຍັງລໍຊ້າຢູ່ເຮັດຫຍັງ ຈົ່ງລຸກ
ຂຶ້ນຮັບບັບຕິສະມາ ແລະຊຳຮະລ້າງຄວາມ
ຜິດບາບຂອງເຈົ້າເສັຽດ້ວຍຮ້ອງອອກພຣະ
ນາມຂອງພຣະອົງ” **ກິຈການ 22:16**



ອ່າງທອງເຫລືອງ

ບ່ອນອານາມັຍ ( ບ່ອນລ້າງ )

# ບ່ອນ ສັກ ສິດ

## (ສະ ຖານ ທີ່ ນະ ມັດ ສະ ການ)







### ຕະກຽງຄຳ

ເປັນຄວາມສວ່າງອັນດຽວໃນຫໍສັກສິດ

ພຣະເຢຊູຊົງກ່າວຕໍ່ເຂົາວ່າ, "ເຮົາ
ນີ້ແຫລະ, ເປັນຄວາມສວ່າງຂອງໂລກ
ຜູ້ທີ່ຕາມເຮົາມາຈະບໍ່ທ່ຽວໄປໃນທີ່ມືດ
ແຕ່ຈະມີຄວາມສວ່າງແຫ່ງຊີວິດ"

ໂຢຮັນ 8:12



ໂຢຮັນ 6:35

### ໂຕະເຂົ້າຈີ່

ເຂົ້າຈີ່ປະຈຳວັນຂອງປະໂຣຫິດ

ເຮົາເປັນອາຫານທີ່ມີຊີວິດຊຶ່ງລົງ
ມາຈາກສວັນ ຖ້າຜູ້ໃດກິນອາຫານນີ້
ແລ້ວ ຜູ້ນັ້ນຈະມີຊີວິດສືບໆໄປເປັນ
ນິດ ແລະອາຫານຝ່າຍເຮົາຈະໃຫ້ເພື່ອ
ເປັນຊີວິດຂອງໂລກນັ້ນ ກໍຄືເນື້ອກາຍ
ຂອງເຮົາ

ໂຢຮັນ 6:51



ພຣະນິມິດ 8:3
ເຮັບເຣີ 13:15

### ແທ່ນເຜົາເຄື່ອງຫອມ

ໄຟແມ່ນເອົາມາຈາກແທ່ນ
ຖວາຍເຄື່ອງບູຊາ.
ແທ່ນນີ້ແມ່ນຢູ່ຕໍ່ໜ້າຜ້າກັ້ງ.
ເປັນບ່ອນອະທິຖານ ແລະ
ສັນລະເສີນປະຈຳວັນ.

ແຕ່ຝ່າຍທ່ານທັງຫລາຍເປັນຊາດທີ່
ພຣະເຈົ້າຊົງເລືອກໄວ້ແລ້ວ ເປັນປະໂຣຫິດ
ຫລວງ ເປັນປະຊາຊາດບໍຣິສຸດ ເປັນພົລ
ເມືອງຂອງພຣະເຈົ້າເອງ ເພື່ອທ່ານທັງຫລາຍ
ຈະໄດ້ປະກາດພຣະບາຣະມີຂອງພຣະອົງ ຜູ້ໄດ້
ຊົງເອີ້ນພວກທ່ານໃຫ້ອອກມາຈາກຄວາມ
ມືດ ເຂົ້າໄປສູ່ຄວາມສວ່າງອັນມະຫັສຈັນຂອງ
ພຣະອົງ

I ເປໂຕ 2:9

# ບ່ອນ ສັກ ສິດ ທີ່ ສຸດ

## (ຂ້າງ ໃນ ຂອງ ຜ້າ ກັ້ງ)'

Not to Scale






ທີ່ນັ້ນ ເຮົາຈະພົບກັບເຈົ້າຢູ່ທີ່ເທິງ
ພຣະທີ່ນັ່ງກະຣຸນານັ້ນ ຄືລະຫວ່າງ
ງກາງທັງສອງຂອງເຊຣູບິມ ຊຶ່ງຕັ້ງຢູ່
ເທິງຫີບພຣະໂອວາດ ເຮົາຈະສົນທະ
ນາກັບເຈົ້າທຸກເຣື່ອງ ຊຶ່ງເຮົາຈະສັ່ງ
ເຈົ້າໃຫ້ປະກາດແກ່ຊົນຊາດອິສຣາ
ເອນ.

ອົບພະຍົບ 25:22

ຫີບຄຳໝັ້ນສັນຍາ

ອົບພະຍົບ 25:10-11

ຜ້າກັ້ງ ສີຟ້າ, ສີມ່ວງ ແລະ ສີແດງ - *ອົບພະຍົບ 36:35* ຜ້າກັ້ງ — ພຣະກາຍຂອງພຣະອົງ - ເຮັບເຣີ *10:20*

### ສິ່ງ ທີ່ ຢູ່ ໃນ ຫີບ



ໄມ້ເທົ້າຂອງອາໂລນທີ່ປົ່ງຍອດ
*ເຮັບເຣີ 9:4*



ແຜ່ນຫີນ
*ອົບພະຍົບ 25:16 ເຮັບເຣີ 9:4*



ຂັນຄຳໃສ່ມານາ
*ເຮັບເຣີ 9:4*

# ຈາກ ຫໍ ເຕັນ ສັກ ສິດ ເຖິງ ໄມ້ ກາງ ແຂນ




**ພຣະວິນຍານບໍຣິສຸດ**

ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະຕັ້ງຕົ້ນປາກພາສາຕ່າງໆຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ

**ກິຈການ 2:4**

**ບັບຕິສະມາ**

ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງກັ້ນໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ **ກິຈການ 2:38**

**ກາຍກັບໃຈ**

ເຮົາທັງຫລາຍຮູ້ສິ່ງນີ້ແລ້ວວ່າ ເພດຄົນເກົ່າຂອງພວກເຮົານັ້ນໄດ້ຖືກຄຶງໄວ້ກັບພຣະອົງແລ້ວ ເພື່ອເພດຄົນເກົ່າຊຶ່ງເປັນທີ່ຢູ່ຂອງຄວາມຜິດບາບນັ້ນ ຈະໄດ້ຖືກທຳລາຍເສັຽ ແລະພວກເຮົາຈຶ່ງຈະບໍ່ໄດ້ເປັນຂ້ອຍຂ້າຂອງຄວາມຜິດບາບອີກຕໍ່ໄປ **ໂຣມ 6:6**

# ການສຶກສາພຣະຄັມຂອງພຣະເຈົ້າ




# ບົດຮຽນທີ່ ຫ້າ

# ແຜ່ນ ດິນ ແຫ່ງ ພຣະ ສັນ ຍາ



# ອາ ນາ ຈັກ ດຽວ

ອິສຣາເອນຂໍ
ຮ້ອງເອົາ
ກະສັດ

ແລ້ວພວກເຈົ້ານາຍອິສຣາເອນທຸກຄົນກໍ່ປະຊຸມກັນ ແລ້ວພາກັນໄປຫາຊາມູເອນທີ່ເມືອງຣາມາ ແລະເວົ້າຕໍ່ທ່ານວ່າ "ທ່ານເອີ້ຍ ທ່ານກໍ່ເຖົ້າແກ່ຫຼາຍແລ້ວ ລູກຊາຍຂອງທ່ານບໍ່ໄດ້ປະພຶດຕາມແບບຢ່າງຂອງທ່ານເລີຍ ສະນັ້ນຂໍທ່ານຈົ່ງແຕ່ງຕັ້ງເຈົ້າຊີວິດໃຫ້ເປັນຜູ້ປົກຄອງພວກຂ້າພະເຈົ້າເໝືອນດັ່ງປະເທດອື່ນໆທີ່ເຂົາປົກຄອງກັນ

I ຊາມູອນ 8:4-5



ຊາອູນ
ປົກຄອງ 40 ປີ

ແລ້ວຊາມູເອນກໍ່ເອົາເຕົ້ານ້ຳມັນໝາກກອກມາຖອກລົງໃສ່ຫົວຂອງຊາອູນ ແລະຈູບຊາອູນແລ້ວເວົ້າວ່າ " ພຣະຜູ້ເປັນເຈົ້າຊົງເອົານ້ຳມັນຊະໂລມຫົດສົງ..." I ຊາມູເອນ 10:1

ຕະກູນເບັນຢາມິນ
I ຊາມູເອນ 9:1
ເປັນຄົນສູງ
I ຊາມູເອນ 9:2
ພຣະໄດ້ປະຕິເສດ
I ຊາມູເອນ 16:14



ດາວິດ
ປົກຄອງ 40 ປີ

ຊາມູເອນຈຶ່ງເອົານ້ຳມັນຊະໂລມມາຫົດສົງດາວິດໃຫ້ເປັນເຈົ້າຊີວິດຕໍ່ໜ້າພວກອ້າຍນ້ອງຂອງທ່ານ ພຣະວິນຍານຂອງພຣະຜູ້ເປັນເຈົ້າກໍ່ຊົງສະຖິດຢູ່ກັບດາວິດ ແລະຊົງຢູ່ກັບທ່ານຕັ້ງແຕ່ວັຍນັ້ນມາ ແລ້ວຊາມູເອນ.."I ຊາມູເອນ 16:13

ເດັກນ້ອຍລ້ຽງແກະ
I ຊາມູເອນ 16:11
ຂ້າຍັກ
I ຊາມູເອນ 17
ຜູ້ທີ່ເຮັດຕາມພຣະປະສົງຂອງພຣະເຈົ້າ
ກິຈການ 13:22



ໂຊໂລໂມນ
ປົກຄອງ 40 ປີ

ໃນທີ່ນັ້ນປະໂຣຫິດຊາໂດກ ແລະນາທານຜູ້ປະກາດພຣະທັມເອົານ້ຳມັນຊະໂລມຫົດສົງ ແລະແຕ່ງຕັ້ງເຂົາໃຫ້ເປັນເຈົ້າຊີວິດແຫ່ງອິສຣາເອນ ແລ້ວຈົ່ງເປົ່າແກແລະຮ້ອງຂຶ້ນວ່າ, "ກະສັດໂຊໂລໂມນຈົ່ງຊົງພຣະຈະເຣີນ

I ກະສັດ 1:34

ພຣະເຈົ້າປະທານສະຕິປັນຍາໃຫ້
I ກິສັດ 3
ສ້າງພຣະວິຫານ
I ກະສັດ 6

ເອລີຢາ



ເອລີຊາ



ເປັນສະເລີຍ
ເສີກຢ້ອັດຊີເລັຍ
ປີ 721 ກ.ສ

ພຣະເຈົ້າໄດ້ສົ່ງຜູ້ທຳນາຍເຕືອນ
ອານາຈັກ ອິສຣາເອນ

ອານາຈັກ ອິສຣາເອນ
ສິບຕະກູນ ( ອານາຈັກທາງທິດເໜືອ )
ຊາມາເຣັຍ – ເມືອງຫລວງ
19 ກະສັດ

ເຢໂລໂບອາມ ກະບົດ

# ອາ ນາ ຈັກ ຖືກ ແບ່ງ ເປັນ ສອງ

ເລໂຮໂບອາມ ລູກຊາຍຂອງໂຊໂລໂມນ

ອານາຈັກ ຢູດາ
ສອງ ຕະກູນ ( ອານາຈັກທາງທິດໃຕ້ )
ເຢຣູຊາເລັມ – ເມືອງຫລວງ
19 ກະສັດ, 1 ຣາຊີນີ

ພຣະເຈົ້າໄດ້ສົ່ງຜູ້ທຳນາຍເຕືອນ
ອານາຈັກ ຢູດາ

ເອຊາຢາ

ເຢເລມີຢາ

ເປັນສະເລີຍເສີກ
ຢ່ບາບີໂລເນັຍ
ປີ 606 ກ.ຄ

ເຢຣຊາເລັມ
ຖືກທຳລາຍ

ເອເສກຽນ

ດານີເອນ



ຄຳທຳນາຍຂອງ ເອເສກຽນ, ດານີເອນ
ໃນຊ່ວງເປັນສະເລີຍເສີກຢ່ ບາບີໂລເນັຍ

# ກັບ ຄືນ ສູ່ ເຢ ຣູ ຊາ ເລັມ



ພຣະຜູ້ເປັນເຈົ້າຈອມໂຍທາຊົງກ່າວດັ່ງນີ້ ເຮົາຈະສົ່ງຜູ້ສົ່ງຂ່າວໄປຈັດຕຽມຫົນທາງໄວ້ສຳລັບເຮົາ ແລ້ວໃນທັນໃດນັ້ນ ພຣະຜູ້ເປັນເຈົ້າອົງທີ່ເຈົ້າຊອກສແວງຫາກໍຈະສະເດັດມາໃນພຣະວິຫານຂອງພຣະອົງ ຜູ້ສົ່ງຂ່າວທີ່ພວກເຈົ້າຢາກເຫັນແຕ່ເຫິງນານ ກໍຈະມາປະກາດຄຳຫມັ້ນສັນຍາຂອງເຮົາ

**ມາລາກີ 3:1**

**ເສລູບາເບນໄດ້ສ້າງພຣະວິຫານຂຶ້ນໃໝ່** ( ເລີ້ມຕົ້ນປີ 536 ກ. ຄ.)

**ຜູ້ທຳນາຍ – ຮັກກາຍ, ເສກາລີຢາ, & ມ້າລາກີ ໄດ້ສະນັບສະໜູນ ແລະ ສັ່ງສອນປະຊາຊົນ.**

**ກັບມາຈາກ**
**ບາບີໂລເນັຍ**
**ສູ່**
**ເຢຣູຊາເລັມ** → **ເສລບາເບນ**
**ເອັສາລາ**
**ເນເຫມີຢາ**

**ເນເຫມີຢາ ສ້າງກຳແພງຂຶ້ນໃໝ່**
( ປີ 444 ກ. ຄ.)



**ພຣະທັມຄຳພີເດີມ ໄດ້ຈົບລົງ**
ສີ່ຮ້ອຍປີແຫ່ງຄວາມມິດງຽບ

# ການສຶກສາພຣະຄັມຂອງພຣະເຈົ້າ




ບົດຮຽນທີ່ ຫົກ

# ການ ແນະ ນຳ ເຖິງ

# ພຣະ ທັມ ຄັມ ພີ ໃໝ່

400 ປີ ແຫ່ງຄວາມມິດງຽບ
ລະວາງພຣະທັມຄັມພີເດີມ
ແລະພຣະທັມຄັມພີໃໝ່

***27 ເຫຼັ້ມ***
***8 ນັກຂຽນ***
***100 ປີ***

ຢ່າຄຶດວ່າເຮົາມາລຶບລ້າງພຣະບັນຍັດ ແລະ ຖ້ອຍຄຳຂອງຜູ້ປະກາດພຣະທັມເສັຽ ເຮົາບໍ່ ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສຳເຣັດຄົບ ຖ້ວນ
ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຕາບໃດຟ້າແລະດິນຍັງຕັ້ງຢູ່ ແມ່ນແຕ່ຈຸດ ຫລືຂີດໃດໆ ກໍຈະບໍ່ສູນໄປຈາກພຣະບັນຍັດ ຈົນກ່ວາສິ່ງທັງປວງ... ມັດທາຍ **5:17-18**

ພຣະຄັມພີທຸກຕອນໄດ້ຮັບການຊົງບັນ ດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນ ການສອນ ການກ່າວຕັກເຕືອນວ່າກ່າວ ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການ ອົບຮົມໃນທາງຊອບທັມ **II** ຕີໂມທຽວ **3:16**

## ພຣະ ທັມ ຄັມ ພີ ໃ ໝ່

ປະຫວັດສາດ
ຂອງຄຣິສຕະຈັກ

ປະຫວັດຂອງ
ພຣະຄຣິສ

ຄຳ ແນະ ນຳ ສຳ ລັບ ຄຣິສ ຕະ ຈັກ

ຄຳທຳນາຍ

ຈົດໝາຍຂອງ ເປົາໂລ

ຈົດໝາຍທົ່ວໄປ



# ໂຢ ຮັນ ບັບ ຕິ ສະ ໂຕ

## (ຜູ້ ເປີດ ທາງ ລ່ວງ ໜ້າ ຂອງ ພຣະ ຄຣິສ)



### ຄຳທຳນາຍກ່ຽວກັບໂຢຮັນ

ສຽງນຶ່ງຮ້ອງຂຶ້ນວ່າ, "ຈົ່ງຈັດຕຽມຫົນ
ທາງໄວ້ໃນທະເລຊາຍ ເພື່ອຕ້ອນຮັບພຣະ
ຜູ້ເປັນເຈົ້າ ຈົ່ງປັດກວາດຫົນທາງໃນຖິ່ນ
ກັນດານໃຫ້ສະອາດ ເພື່ອຕ້ອນຮັບພຣະ
ເຈົ້າຂອງພວກເຮົາ

ເອຊາຢາ 40: 40:3

ພຣະຜູ້ເປັນເຈົ້າຈອມໂຍທາຈຶ່ງກ່າວດັ່ງນີ້
ເຮົາຈະສົ່ງຜູ້ສົ່ງຂ່າວໄປຈັດຕຽມຫົນທາງໄວ້
ສຳລັບເຮົາ ແລ້ວໃນທັນໃດນັ້ນ ພຣະຜູ້ເປັນ
ເຈົ້າອົງທີ່ເຈົ້າຊອກສແວງຫາກໍຈະສະເດັດມາ
ໃນພຣະວິຫານຂອງພຣະອົງ ຜູ້ສົ່ງຂ່າວທີ່
ພວກເຈົ້າຢາກເຫັນແຕ່ເຫີງນານ ກໍຈະມາປະ
ກາດຄຳຫມັ້ນສັນຍາຂອງເຮົາ

*ມາລາກີ* 3:1

### ໂຢຮັນແນະນຳ

### ພຣະຄຣິສແກ່ໂລກ

ລ່ວງໄປວັນນຶ່ງໂຢຮັນໄດ້ເຫັນພຣະເຢຊູກຳ
ລັງສະເດັດມາຫາ ທ່ານຈຶ່ງກ່າວວ່າ, "ເບິ່ງ
ແມ່, ພຣະເມສານ້ອຍຂອງພຣະເຈົ້າ ຜູ້ຊຶ່ງ
ຮັບເອົາຄວາມຜິດບາບຂອງມະນຸສໂລກ
ໄປເສັຽ

ໂຢຮັນ 1:29

### ຄຳສອນຂອງໂຢຮັນ

"ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ເພາະວ່າ
ຣາຊອານາຈັກສວັນໄດ້ມາໃກ້ແລ້ວ."

ມັດທາຍ 3:2

ຝ່າຍເຮົາ ເຮົາໃຫ້ພວກສູຮັບບັບຕິສະມາ
ດ້ວຍນ້ຳ ຫມາຍເຖິງການຖິ້ມໃຈເກົ່າເອົາໃຈ
ໃຫມ່ກໍແມ່ນ ແຕ່ຜູ້ທີ່ຈະມາພາຍຫລັງເຮົາກໍ
ມີຣິດກວ່າເຮົາອີກ ຊຶ່ງເຮົາບໍ່ສົມຄວນຈະຈັບ
ເກີບຂອງທ່ານໄປ ຝ່າຍຜູ້ນັ້ນຈະໃຫ້ພວກສູ
ຮັບບັບຕິສະມາດ້ວຍພຣະວິນຍານບໍຣິສຸດ
ແລະດ້ວຍໄຟ

ມັດທາຍ 3;11



ມາລາໂກ 1:8
ລູກາ 3:2-17

# ພຣະ ເຢ ຊູ ຄຣິສ ປະ ສູດ

ຄຳທຳນາຍກ່ຽວ
ກັບພຣະເຢຊູ

**ສະຖານທີ່ປະສູດ**
ມີກາ 5:2

**ປະສດຈາກຍິງສາວບໍຣິສຸດ**
ເອຊາຢາ 7:4
ເອຊາຢາ 9:6



ນາງຈະປະສູດບຸດ ແລ້ວເຈົ້າຈົ່ງຖວາຍນາມທ່ານວ່າ ເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ ມັດທາຍ 1:21

# ຄຳ ທຳ ນາຍ ກ່ຽວ ກັບ ພຣະ ເຢ ຊູ ຄຣິສ

| ຄຳທຳນາຍ ໃນພຣະ ຄັມພີເດີມ | | ຄົບບໍຣິບູນ ໃນພຣະ ຄັມພີໃໝ່ |
|---|---|---|
| ປະຖົມມະການ 3:15 | ພົງພັນຂອງຜູ້ຍິງ | ມັດທາຍ 1:20 |
| ເອຊາຢາ 7:14 | ຍິງສາວປະສູດບຸດ | ມັດທາຍ 1:18 |
| ປະຖົມມະການ 49:10 | ເຊື້ອສາຍຂອງ ຢູດາ | ລູກາ 3:23, 33 |
| ມີກາ 5:2 | ປະສູດທີ່ບ້ານ ເບັດເລເຮັມ | ມັດທາຍ 2:1 |
| ເພງສັນລະເສີນ 72:10 | ເອົາເຄື່ອງຫອມຖວາຍມອບໃຫ້ | ມັດທາຍ 2:1, 11 |
| ເຢເຣມີຢາ 31:15 | ກະສັດເຮໂຣດຂ້າພວກເດັກນ້ອຍ | ມັດທາຍ 2:16 |
| ເອຊາຢາ 7:14 | ຊື່ງນາມວ່າ "ເອມານູເອນ" | ມັດທາຍ 1:23 |
| ເອຊາຢາ 40:3 | ຊົງສົ່ງຜູ້ປະກາດຂ່າວໄປກ່ອນ | ມັດທາຍ 3:1-2 |
| ເອຊາຢາ 35:5-6 | ການທຳສິ່ງອັສຈັນ | ມັດທາຍ 9:35 |
| ເສກາລີຢາ 9:9 | ຂີ່ໂຕລໍສະເດັດເຂົ້າເມືອງເຢຣູຊາເລັມ | ລູກາ 19:35-37 |
| ເພງສັນລະເສີນ 16:10 | ການຄືນພຣະຊົນ | ກິດຈະການ 2:31 |
| ເພງສັນລະເສີນ 68:18 | ສະເດັດຂຶ້ນສູ່ສະຫວັນ | ກິດຈະການ 1:9 |
| ເພງສັນລະເສີນ 41:9 | ການຖືກຫັກຫລັງດ້ວຍເພື່ອນ | ໂຢຮັນ 13:21 |
| ເສກາລີຢາ 11:12 | ຖືກຂາຍດ້ວຍເງິນ 30 ຫລຽນ | ມັດທາຍ 26:15 |
| ເສກາລີຢາ 11:13 | ຖິ້ມເງິນໄວ້ໃນພຣະວິຫານ | ມັດທາຍ 27:5 |
| ເສກາລີຢາ 13:7 | ສາວົກປະຖິ້ມພຣະອົງ | ມັດທາຍ 26:56 |
| ເພງສັນລະເສີນ 35:11 | ຖືກກ່າວຫາດ້ວຍພະຍານເທັດ | ມັດທາຍ 26:59-60 |
| ເອຊາຢາ 53:7 | ບໍ່ປາກບໍ່ເວົ້າຢູ່ຕໍ່ໜ້າຜູ້ກ່າວຫາ | ມັດທາຍ 27:12 |
| ເອຊາຢາ 53:5 | ຮັບບາດເຈັບ ແລະ ບວບຊ້ຳ | ມັດທາຍ 27:26 |
| ເອຊາຢາ 50:6 | ຖືກຂ້ຽນຕີ ແລະ ຖືກຖົ່ມນ້ຳລາຍໃສ່ | ມັດທາຍ 27:30 |
| ເພງສັນລະເສີນ 22:7-8 | ຖືກເຢາະເຢີ້ຍ | ມັດທາຍ 27:31 |
| ເພງສັນລະເສີນ 22:16 | ມື ແລະ ຕີນຖືກແທງ | ໂຢຮັນ 20:25 |
| ເອຊາຢາ 53:12 | ຄຶງທີ່ໄມ້ກາງແຂນກັບໂຈນ | ມັດທາຍ 27:38 |
| ເພງສັນລະເສີນ 22:18 | ເສື້ອຜ້າຂອງພຣະອົງຖືກແບ່ງປັນແລະຈົກສະລາກ | ໂຢຮັນ 19:23-24 |
| ເພງສັນລະເສີນ 22:1 | ພຣະອົງຮ້ອງໄຫ້ວ່າຖືກປ່ອຍຖິ້ມ | ມັດທາຍ 27:46 |
| ເພງສັນລະເສີນ 34:20 | ກະດູກບໍ່ແຕກບໍ່ຫັກ | ໂຢຮັນ 19:33-36 |
| ເສກາລີຢາ 12:10 | ຂ້າງຖືກແທງ | ໂຢຮັນ 19:34 |
| ເອໂມດ 8:9 | ຄວາມມືດປົກຄຸມທົ່ວແຜ່ນດິນ | ມັດທາຍ 27:45 |
| ເອຊາຢາ 53:9 | ພຣະສົບຊົງບັນຈຸໄວ້ໃນອຸໂມງຂອງຄົນຮັ່ງມີ | ມັດທາຍ 27:57-60 |

# ການ ອັດ ຈັນ ຂອງ ພຣະ ເຢ ຊູ



**ຮັບບັບຕິສະມາ**

ມັດທາຍ **3:13-17**

ຄົນຕາບອດຈະເຫັນຮຸ່ງ ຄົນຫູຫນວກຈະໄດ້ຍິນ
ຄົນພິການກໍຈະເຕັ້ນ ແລະພ້ອນຄືຟານ ຄົນປາກກືກຈະໂຮ່ຮ້ອງດ້ວຍຄວາມຍິນດີ ສາຍນ້ຳຈະໄຫລຜ່ານຖິ່ນກັນດານ

ເອຊາຢາ **35:5-6**

ເມື່ອພຣະເຢຊູຊົງສັ່ງພວກສາວົກສິບສອງຄົນຂອງຕົນແລ້ວ ພຣະອົງໄດ້ສະເດັດຈາກທີ່ນັ້ນໄປສັ່ງສອນແລະປ່າວປະກາດໃນເມືອງທັງຫລາຍຂອງເຂົາຝ່າຍໂຢຮັນ, ເມື່ອຢູ່ໃນຄຸກ ໄດ້ຍິນຂ່າວກິຈການຂອງພຣະຄຣິດ ກໍໄດ້ໃຊ້ສິດໄປທູນຖາມພຣະອົງວ່າ, “ທ່ານເປັນຜູ້ທີ່ຈະມານັ້ນຫລື ຫລືຈະຕ້ອງຄອງຖ້າຜູ້ອື່ນ” ຝ່າຍພຣະເຢຊູຊົງຕອບເຂົາວ່າ, “ຈົ່ງໄປແຈ້ງແກ່ໂຢຮັນຕາມທີ່ທ່ານໄດ້ຍິນແລະໄດ້ເຫັນຄືຄົນຕາບອດກໍເຫັນຮຸ່ງ, ຄົນຂາເສັງກໍຍ່າງເປັນປົກກະຕິ, ຄົນຂີ້ທູດກໍດີສະອາດ, ຄົນຫູຫນວກກໍໄດ້ຍິນ, ຄົນຕາຍແລ້ວກໍເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນອະນາຖາ ບຸກຄົນໃດບໍ່ສະດຸດສົງສັຍເພາະເຮົາ ຜູ້ນັ້ນກໍເປັນສຸກ”

ມັດທາຍ **11:2-6**



**ການຖືກທົດລອງ**

ມັດທາຍ **4:1-10**



**ຄົນຕາບອດເຫັນຮຸ່ງ**

ມັດທາຍ **9:27-30**



**ຄົນເປັນລີ່ຍຍ່າງໄດ້**

ໂຢຮັນ **5:5**



**ຄົນຂີ້ທູດດີສະອາດ**

ມັດທ້າຍ **8:2-4**



**ຄົນຫູໜວກໄດ້ຍິນ**

ມາຣະໂກ **7:35-37**



**ຄົນຕາຍເປັນຄືນມາ**

ໂຢຮັນ **11:41-44**

# ການສຶກສາພຣະຄັມຂອງພຣະເຈົ້າ




## ບົດຮຽນທີ່ ເຈັດ

# ພຣະ ເຢ ຊູ ສອນ ການ ບັງ ເກີດ ໃໝ່

ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດນຳຈາກນໍ້າແລະຈາກພຣະວິນຍານ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້ **ໂຢຮັນ 3:5**

ໃນວັນສຸດທ້າຍຂອງງານເທສການຊຶ່ງເປັນວັນໃຫຍ່ນັ້ນ ພຣະເຢຊູຊົງຢືນແລະຮ້ອງຂຶ້ນວ່າ, "ຖ້າຜູ້ໃດຫິວ ຜູ້ນັ້ນຈົ່ງມາຫາເຮົາແລະດື່ມ
ຜູ້ທີ່ວາງໃຈໃນເຮົາແມ່ນໍ້າອັນມີຊີວິດຈະໄຫລອອກຈາກພາຍໃນຜູ້ນັ້ນ ຕາມທີ່ພຣະຄັມພີກ່າວໄວ້ແລ້ວ"
ສິ່ງທີ່ພຣະເຢຊູຊົງກ່າວນັ້ນຫມາຍເຖິງພຣະວິນຍານ ຊຶ່ງຜູ້ທີ່ວາງໃຈໃນພຣະອົງຈະໄດ້ຮັບ ເຫດວ່າຍັງບໍ່ໄດ້ຊົງປະທານພຣະວິນຍານໃຫ້ ເພາະພຣະເຢຊູຍັງບໍ່ໄດ້ຊົງຮັບສະງ່າຣາສີ
**ໂຢຮັນ 7:37-39**



**ພຣະເຢຊູແລະນີໂກເດມ**
**ໂຢຮັນ 3:1-7**

# ພຣະ ເຢ ຊູ ສອນ ໃນ ຄຳ ອຸ ປະ ມາ

ຝ່າຍພວກສາວົກຈຶ່ງມາທູນພຣະອົງວ່າ,
“ເຫດສັນໃດທ່ານຈຶ່ງກ່າວກັບເຂົາເປັນ
ຄຳອຸປມາ” ພຣະອົງຊົງຕອບເຂົາວ່າ,
“ຂໍຄວາມເລິກລັບເຣື່ອງຣາຊອານາຈັກ
ສວັນຊົງໂຜດໃຫ້ທ່ານທັງຫລາຍຮູ້ໄດ້
ແຕ່ຄົນເຫລົ່ານັ້ນບໍ່ຊົງໂຜດໃຫ້ຮູ້

ມັດທາຍ 13:10-11



**ຜ້ຫວ່ານ**

ມັດທ້າຍ 13:1-23

ເຈົ້າເປັນດິນ
ຊະນິດໃດ?



**ໄຂ່ມຸກທີ່ມີລາຄາແພງ**

ມັດທາຍ 13:45

ເຈົ້າຈະຈ່າຍລາຄາເທົ່າໃດ?



**ເງິນຕາລັນຕົນ**

ມັດທາຍ 25:14-25

ເຈົ້າຈະເຮັດຫຍັງກັບຊີວິດຂອງເຈົ້າ?

# ເສັ້ນ ທາງ ສູ່ ຄານ ວາ ຣີ (calvary)



ຂະບວນແຫ່ເຂົ້າຢ່າງຜູ້ມີໄຊ
ມັດທາຍ 21:1-17
ເສກາລີຢາ h 9:9



ອາຫານເທື່ອສຸດທ້າຍ
ມັດທາຍ 26:18-28



ພຣະເຢຊູອະທິຖານທີ່ສວນເຄັດເຊມາເນ
ມັດທາຍ 26:36-44





**ຖືກຂ້ຽນຕີ**
ເອຊາຢາ **50:6**
ເອຊາຢາ 52:14
ໂຢຮັນ 19:1

**ເພື່ອໃຫ້ຫາຍດີ**
ເພັງສັນລະເສີນ **103:3**
ເອຊາຢາ **53:5**
I ໂກຣິນໂທ 12:9
ຢາໂກໂບ 5:14-16
I ເປໂຕ 2:24

ແຕ່ເຂົາຖືກບາດເຈັບຍ້ອນບາບຂອງ
ພວກເຮົາທັງຫລາຍ ເຂົາຖືກຕີຍ້ອນພວກ
ເຮົາທຳຊົ່ວ ການລົງໂທດທີ່ເຂົາໄດ້ຮັບນັ້ນ
ທຳໃຫ້ພວກເຮົາເປັນອິສຣະສົມບູນ ທີ່ເຂົາ
ຖືກຕີນັ້ນກໍເພື່ອໃຫ້ເຮົາຫາຍດີ
ເອຊາຢາ **53:5**

ຖືກຫັກຫລັງ
ມັດທາຍ 26:46-50



ຖືກສອບຖາມ
ມັດທາຍ 26:62-68

# ພຣະຄຣິສໄດ້ສິ້ນພຣະຊົນເພື່ອພວກເຮົາ

ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍ ຄືຂນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ **ໂຣມ 5:8**

ດ້ວຍວ່າຖ້າເມື່ອເຮົາທັງຫລາຍຍັງເປັນສັດຕຣູຕໍ່ພຣະເຈົ້າ ພຣະເຈົ້າໄດ້ຊົງໂຜດໃຫ້ພວກເຮົາໄດ້ກັບຄືນດີກັບພຣະອົງ ໂດຍທີ່ພຣະບຸດຂອງພຣະອົງຊົງສິ້ນພຣະຊົນແລ້ວ ຫລາຍກວ່ານັ້ນອີກເມື່ອເຮົາທັງຫລາຍໄດ້ກັບຄືນດີແລ້ວພວກເຮົາກໍຈະໄດ້ພົ້ນດ້ວຍການຊົງຄືນ.... **ໂຣມ 5:10**

ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ **II ໂກຣິນໂທ 5:21**



**ມັດທາຍ 27**

# ພຣະ ຄຣິສ ຊົງ ດຳ ລົງ ຢູ່

ເຣື່ອງທີ່ເຮົາໄດ້ຮັບໄວ້ແລ້ວນັ້ນ ເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍເປັນເຣື່ອງສຳຄັນທີ່ສຸດຄືວ່າ ພຣະຄຣິດຊົງວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງ ຫລາຍ ຕາມທີ່ຂຽນໄວ້ໃນພຣະຄັມພີ
ແລະຊົງຖືກວາງໄວ້ ແລ້ວວັນຖ້ອນສາມໄດ້ຖືກຊົງບັນດານໃຫ້ຄືນຂຶ້ນມາ ຕາມທີ່ຂຽນໄວ້ໃນພຣະຄັມພີນັ້ນ

**I ໂກຣິນໂທ 15:3-4**





ຄັນພຣະອົງຊົງທົນທຸກທໍຣະມານ ແລ້ວໄດ້ຊົງສະແດງພຣະອົງແກ່ຄົນພວກນັ້ນດ້ວຍຫລັກຖານຫລາຍຢ່າງ ພິສູດວ່າພຣະອົງຊົງພຣະຊົນຢູ່ ແລະໄດ້ຊົງປາກົດແກ່ເຂົາລະຫວ່າງສີ່ສິບວັນ ແລະໄດ້ຊົງສົນທະນາກັບເຂົາເຖິງເຣື່ອງຣາຊອານາຈັກຂອງພຣະເຈົ້າ

**ກິຈການ 1:3**

**ພຣະເຢຊູໄດ້ປະກົດແກ່**
**ອາສາວົກຂອງພຣະອົງ**

ມັດທາຍ **28:16-20**
ມາຣະໂກ **16:9-20**
ລູກາ **24:13-53**
ໂຢຮັນ **20:19-31**
**I ໂກຣິນໂທ 15:4-7**

**ໄດ້ເຫັນ 40 ມື້**

ກິຈການ **1:3**

**500 ໄດ້ເຫັນ**

**I ໂກຣິນໂທ 15:4-7**

# ວຽກ ງານ ອັນ ຍິ່ງ ໃຫຍ່ ທີ່ ມອບ ໃຫ້

ແລະຈະຕ້ອງປະກາດທົ່ວທຸກປະເທດໃນພຣະນາມຂອງພຣະອົງໃຫ້ຖິ້ມໃຈເກົ່າເອົາໃຈໃຫມ່ຮັບການຍົກບາບໂທດ ຕັ້ງແຕ່ກຸງເຢຣູຊາເລັມໄປ

ລູກາ 24:47

## ວຽກງານອັນຍິ່ງໃຫຍ່

ມັດທາຍ 28:19-20
ມາຣະໂກ 16:15-18
ລູກາ 24:45-49
ກິຈການ 1:4-8

## ສ່ວນປະກອບໃນວຽກງານອັນຍິ່ງໃຫຍ່ຄື:

1. ຄວາມເຊື່ອ
2. ການກັບໃຈ
3. ຮັບບັບຕິສະມາໃນນ້ຳ
4. ພຣະວິນຍານບໍຣິສຸດ ກັບ ສິ່ງສັນຍານທີ່ເໜືອນທັມຊາດ
5. ສັ່ງສອນ
6. ການຮັກສາພະຍາດ

ເມື່ອພຣະອົງຊົງກ່າວດັ່ງນັ້ນແລ້ວ ພຣະເຈົ້າຊົງຮັບພຣະອົງຂຶ້ນເມືອ ຂນະທີ່ເຂົາກຳລັງເບິ່ງຢູ່ ແລະມີເມກມາຮັບພຣະອົງໃຫ້ພົ້ນຈາກສາຍຕາຂອງເຂົາ ກິຈການ 1:9



# ພຣະ ເຈົ້າ ຜູ້ ຊົງ ຣິດ ໃນ ພຣະ ຄຣິສ

ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ນຶ່ງຜູ້ໃດນໍາເຈົ້າທັງຫລາຍ
ຕົກໄປເປັນເຫຍື່ອສະຕິປັນຍາຂອງໂລກ ຊຶ່ງເປັນຄໍາ
ຫລອກລວງ ແລະໄຮ້ສາຣະຕາມຄໍາບານຂອງມະນຸດ
ທີ່ສືບຕໍ່ກັນມາ ຕາມອໍານາດສິ່ງສັກສິດແຫ່ງສາກົນ
ຈັກກະວານແລະບໍ່ໃຊ່ຕາມອົງພຣະຄຣິດ
ເພາະວ່າໃນພຣະອົງນັ້ນສະພາບຂອງພຣະເຈົ້າສະ
ຖິດຢູ່ໃນພຣະກາຍຢ່າງເຕັມບໍຣິບູນ ແລະເຈົ້າທັງ
ຫລາຍໄດ້ມີຊີວິດຄົບບໍຣິບູນໃນພຣະອົງ

**ໂກໂລຊາຍ 2:8-9**

ເຮົາຕ້ອງຍອມຮັບວ່າ ຂໍ້ລັບເລີກແຫ່ງ
ສາສນາຂອງເຮົານີ້ກໍໃຫຍ່ຫລາຍ ຄືວ່າ ພຣະ
ອົງຊົງປາກົດມີສະພາບເປັນມະນຸດ ພຣະວິນ
ຍານໄດ້ຊົງປະກາດວ່າຊົງເປັນຜູ້ຊອບທັມ,ຝູງ
ເທວະດາກໍໄດ້ເຫັນ ມີຜູ້ປະກາດພຣະອົງແກ່
ພວກຕ່າງຊາດ ມີຊາວໂລກໄດ້ເຊື່ອຖືພຣະອົງ
ພຣະອົງຊົງຖືກຮັບຂຶ້ນເມືອສູ່ພຣະຣັສມີ

**I ຕີໂມທຽວ 3:16**

ຄືພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະ
ຄຣິດ ໄດ້ຊົງກະທໍາໃຫ້ມະນຸດຄືນດີກັນກັບ
ພຣະອົງ ບໍ່ໄດ້ຊົງຖືໂທດໃນການຜິດບາບ
ຂອງເຂົາ ແລະຊົງມອບຂ່າວເຣື່ອງການທີ່
ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ

**II ໂກຣິນໂທ 5:19**



# ການສຶກສາພຣະຄັມຂອງພຣະເຈົ້າ




ບົດຮຽນທີ່ ແປດ

# ການ ສະ ຖາ ປາ ນາ ຄຣິສ ຕະ ຈັກ

## ຄຳສັນຍາຂອງພຣະວິນຍານບໍຣິສຸດ

ແລະເບິ່ງແມ່, ອັນທີ່ພຣະບິດາຂອງເຮົາ
ໄດ້ຊົງສັນຍາໄວ້ນັ້ນ ເຮົາກໍໃຊ້ມາເທິງທ່ານທັງ
ຫລາຍ ແຕ່ຝ່າຍພວກທ່ານຈົ່ງຄອຍຢູ່ໃນກຸງ
ຈົນກວ່າພວກທ່ານຈະໄດ້ປະກອບດ້ວຍຣິດ
ເດດທີ່ມາຈາກເບື້ອງເທິງ” ລູກາ 24:49

ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊ
ທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະ
ສະເດັດມາເຖິງພວກທ່ານ ແລະພວກທ່ານ
ຈະເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມ,
ຕລອດທົ່ວແຂວງຢູດາຍ, ກັບແຂວງຊາມາ
ເຣັຽ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ”
ກິຈການ 1:8

ເອຊາຢາ 28:11-12
ເຢເລມີຢາ 31:31
ໂຢເອນ 2:28-29
ໂຢຮັນ 7:37-39

## ພວກເຂົາກໍ່ເຕັມໄປດ້ວຍ
## ພຣະວິນຍານບໍຣິສຸດ

ເມື່ອຄົບຮອບວັນເທສການເພັນເຕ
ຄອສ ເຂົາທັງຫມົດໄດ້ພ້ອມກັນຢູ່ໃນ
ບ່ອນດຽວ
ໃນທັນໃດນັ້ນເກີດມີສຽງມາຈາກຟ້າ
ສວັນເຫມືອນສຽງລົມພະຍຸກ້າ ກ້ອງສນັ່ນ
ທົ່ວເຮືອນທີ່ເຂົານັ່ງຢູ່ນັ້ນ
ມີລີ້ນເປັນຮູບເຫມືອນແປວໄຟໄດ້ປາກົດ
ໃຫ້ເຂົາເຫັນແລະລີ້ນນັ້ນແຕກກະຈາຍ
ອອກໄປຢູ່ເທິງເຂົາທຸກຄົນຜູ້ລະລີ້ນ
ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພຣະວິນ
ຍານບໍຣິສຸດ,ແລະຕັ້ງຕົ້ນປາກພາສາ
ຕ່າງໆຕາມທີ່ພຣະວິນຍານຊົງໂຜດໃຫ້
ເຂົາເວົ້ານັ້ນ
ກິຈການ 2:1-4

*ກິຈການ 1:5 ,8*



# ເປໂຕສັ່ງສອນກ່ຽວກັບພຣະຄຣິສ/ ແຜນການຂອງພຣະເຈົ້າສຳລັບພວກເຮົາ

ແລ້ວເປໂຕໄດ້ຢືນຂຶ້ນກັບອັຄສາວົກສິບເອັດຄົນນັ້ນ ແລະໄດ້ກ່າວຄຳປາສັຍດ້ວຍສຽງດັງໃຫ້ເຂົາຟັງວ່າ, "ທ່ານຊາວຢິວ ແລະບັນດາຄົນທີ່ຢູ່ໃນກຸງເຢຣູຊາເລັມເອີຍ, ຈົ່ງຊາບເຣື່ອງນີ້ແລະຕັ້ງຫູຟັງຖ້ອຍຄຳຂອງຂ້າພະເຈົ້າ ດ້ວຍວ່າຄົນເຫລົ່ານີ້ບໍ່ໄດ້ເມົາເຫລົ້າເຫມືອນດັ່ງພວກທ່ານຄຶດນັ້ນ ເພາະຍັງເປັນເວລາສາມໂມງເຊົ້າຢູ່ ແຕ່ການນີ້ແຫລະ, ແມ່ນຕາມທີ່ໄດ້ຊົງກ່າວດ້ວຍໂຢເອນຜູ້ປະກາດພຣະທັມວ່າ, "ພຣະເຈົ້າຊົງກ່າວວ່າ ໃນຄາວສຸດທ້າຍເຮົາຈະຖອກວິນຍານຂອງເຮົາປະທານລົງໃສ່ມະນຸດທັງປວງ ລູກຊາຍແລະລູກຍິງຂອງພວກທ່ານຈະທຳນວາຍ ຊາຍຫນຸ່ມຂອງພວກທ່ານຈະຝັນເຫັນ

**ກິຈການ 2:14-17**

ເຫດສັນນັ້ນໃຫ້ຍາດວົງອິສຣາເອນຮູ້ຄັກແນ່ວ່າ ພຣະເຈົ້າໄດ້ຊົງຍົກພຣະເຢຊູນີ້ ຊຶ່ງທ່ານທັງຫລາຍໄດ້ຕອກຕິດໄວ້ທີ່ໄມ້ກາງແຂນນັ້ນ ຊົງແຕ່ງຕັ້ງໃຫ້ເປັນທັງອົງພຣະຜູ້ເປັນເຈົ້າແລະເປັນພຣະຄຣິດ

**ກິຈການ 2:36**



## ພວກເຮົາຈະເຮັດຢ່າງໃດ?

ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ ດ້ວຍວ່າພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫລາຍ, ກັບລູກຫລານຂອງພວກທ່ານ ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ"

**ກິຈການ 2:38-39**

**3,000 ໄດ້ເຂົ້າຮ່ວມ!** **ກິຈການ 2:41**

# ການຖິ້ມໃຈເກົ່າເອົາໃຈໃໝ່ (ການກັບໃຈ)

## *ແຜ່ນ ການ ຄວາມ ລອດ ພື້ນ ຂັ້ນ ຕົ້ນ*

*ສະແດງຄວາມຮູ້ສຶກເສັຍໃຈ ແລະ ສຳນຶກ*
*ຜິດໃນຄວາມບາບທີ່ຜ່ານມາ ແລະ ຫັນ*
*ຫລັງໜີຈາກຄວາມບາບໃນອາຄົດ.*



**ໂຢຮັນບັບຕິສະໂຕ ໄດ້ສັ່ງສອນກ່ຽວກັບການຖິ້ມໃຈເກົ່າເອົາໃຈໃໝ່**

**ມັດທາຍ 3:2**
**ມາລາໂກ 1:4**

**ພຣະເຢຊູ ໄດ້ສັ່ງສອນກ່ຽວກັບການຖິ້ມໃຈເກົ່າເອົາໃຈໃໝ່**

**ລູກາ 13:3**
**ລູກາ 24:47**

**ເປໂຕ ໄດ້ສັ່ງສອນກ່ຽວກັບການຖິ້ມໃຈເກົ່າເອົາໃຈໃໝ່**

**ກິຈການ 2:38**

ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເຣື່ອງ
ພຣະສັນຍາຂອງພຣະອົງ ເຫມືອນດັ່ງບາງຄົນ
ຄຶດວ່າຊ້າ ແຕ່ພຣະອົງຊົງອົດກັ້ນພຣະທັຍໄວ້ດົນ
ນານເພາະເຫັນແກ່ທ່ານທັງຫລາຍ ພຣະອົງບໍ່ຊົງ
ປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັຽ ແຕ່ຊົງ
ປາຖນາທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈ
ເກົ່າເອົາໃຈໃຫມ່

**II ເປໂຕ 3:9**

# ຝັງກັບພຣະອົງໃນການຮັບບັບຕິສະມາ

ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ

**ມັດທາຍ 28:19**

ຜູ້ທີ່ເຊື່ອ ແລະຮັບບັບຕິສະມາແລ້ວ ຈະໄດ້ພົ້ນ ແຕ່ຜູ້ທີ່ບໍ່ເຊື່ອຈະຖືກໂທດ

**ມາຣະໂກ 16:16**

ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດມາຈາກນ້ຳແລະຈາກພຣະວິນຍານ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້

**ໂຢຮັນ 3:5**

ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ

**ກິຈການ 2:38**

ເພາະພຣະວິນຍານບໍຣິສຸດຍັງບໍ່ທັນໄດ້ລົງມາເທິງເຂົາຈັກຄົນ ມີແຕ່ເຂົາໄດ້ຮັບບັບຕິສະມາໃນພຣະນາມແຫ່ງພຣະເຢຊູເຈົ້າເທົ່ານັ້ນ

**ກິຈການ 8:16**

ແລ້ວທ່ານໄດ້ສັ່ງໃຫ້ຢຸດຣົດ ຟີລິບກັບຄົນເທື່ອຍໄດ້ພ້ອມກັນລົງໄປໃນນ້ຳ ຟີລິບຈຶ່ງໃຫ້ທ່ານຮັບບັບຕິສະມາ

ເມື່ອທ່ານທັງສອງຂຶ້ນຈາກນ້ຳແລ້ວ ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າໄດ້ຊົງຮັບເອົາຟີລິບໄປເສັຽ ສ່ວນຄົນເທື່ອຍນັ້ນກໍບໍ່ໄດ້ເຫັນຟີລິບຕໍ່ໄປອີກ ທ່ານຈຶ່ງເດີນທາງຕໍ່ໄປດ້ວຍຄວາມຊົມຊື່ນຍິນດີ

**ກິຈການ 8:38-39**

ເປໂຕຈຶ່ງສັ່ງໃຫ້ເຂົາຮັບບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດ ແລະເຂົາຍັງໄດ້ຂໍໃຫ້ທ່ານພັກຢູ່ກັບເຂົາອີກສອງສາມວັນ

**ກິຈການ 10:48**

ບັດນີ້ເຈົ້າຍັງລໍຊ້າຢູ່ເຮັດຫຍັງ ຈົ່ງລຸກຂຶ້ນຮັບບັບຕິສະມາ ແລະຊຳຣະລ້າງຄວາມຜິດບາບຂອງເຈົ້າເສັຽດ້ວຍຮ້ອງອອກພຣະນາມຂອງພຣະອົງ

**ກິຈການ 22:16**



ເມື່ອໄດ້ຍິນດັ່ງນັ້ນເຂົາຈຶ່ງຮັບບັບຕິສະມາໃນພຣະນາມຂອງພຣະເຢຊູເຈົ້າ

**ກິຈການ 19:5**

ເຫດສັນນັ້ນພວກເຮົາຈຶ່ງໄດ້ຖືກຝັງໄວ້ກັບພຣະອົງ ໂດຍການຮັບບັບຕິສະມາເຂົ້າສ່ວນໃນການສິ້ນພຣະຊົນນັ້ນ ເພື່ອວ່າພຣະຄຣິດໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ ໂດຍຣິດເດດອັນຮຸ່ງເຮືອງຂອງພຣະບິດາສັນໃດ ເຮົາທັງຫລາຍກໍຈະໄດ້ດຳເນີນຕາມຊີວິດໃໝ່ເໝືອນກັນສັນນັ້ນ

**ໂຣມ 6:4**

ດ້ວຍວ່າຝ່າຍພວກເຈົ້າຄົນໃດທີ່ໄດ້ຮັບບັບຕິສະມາໃນພຣະຄຣິດແລ້ວ ຄົນນັ້ນກໍໄດ້ຫົ່ມຊີວິດພຣະຄຣິດ

**ຄາລາເຕັຍ 3:27**

**ຢ່າງໃດ?**

**ຈຸ່ມລົງໃນນ້ຳໃນພຣະນາມຂອງພຣະເຢຊູຄຣິສເຈົ້າ**

**ແມ່ນໃຜ?**

**ຜູ້ທີ່ເຊື່ອທຸກໆຄົນແມ່ນໄດ້ຮັບບັບຕິສະມາໃນພຣະທັມຄັມພີໃໝ່**

# ເຈົ້າ ໄດ້ ຮັບ ພຣະ ວິນ ຍານ ບໍ ຣິ ສຸດ ແລ້ວ ບໍ່?



ພຣະເຢຊູກ່າວວ່າ...

ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດມາຈາກນ້ຳແລະຈາກພຣະວິນຍານ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້ **ໂຢຮັນ 3:5**



ເປໂຕກ່າວວ່າ...

ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ

ດ້ວຍວ່າພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫລາຍ, ກັບລູກຫລານຂອງພວກທ່ານ ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືແກ່ທຸກຄົນທີ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາຊົງເອີ້ນມາເຝົ້າພຣະອົງນັ້ນ **ກິຈການ 2:38-39**



ເປົາໂລກ່າວວ່າ...

ຝ່າຍທ່ານທັງຫລາຍ... 

ອັນນຶ່ງ, ຖ້າແມ່ນພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫລາຍຢ່າງແທ້ຈິງແລ້ວ ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດແຕ່ຢູ່ຝ່າຍພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະຄຣິດ ຜູ້ນັ້ນກໍບໍ່ເປັນຂອງພຣະອົງ **ໂຣມ 8:9**

# ພະຍານຫຼັກຖານກ່ຽວກັບພຣະວິນຍານບໍຣິສຸດ

"ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະຕັ້ງຕົ້ນປາກພາສາຕ່າງໆຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້ານັ້ນ." *ກິຈການ* **2:4**

ເພາະວ່າເຂົາໄດ້ຍິນຄົນເຫລົ່ານັ້ນປາກພາສາແປກໆ ແລະຍົກຍໍສັຣະເສີນພຣະເຈົ້າ **ກິຈການ 10:46**

**ສາວົກ** – ກິຈການ 2
**ແມ່ຂອງພຣະເຢຊູ** – ກິຈການ 2
**ຊາວຊາມາເຣັຽ** – ກິຈການ 8
**ໂກເນລີໂອ, ຄອບຄົວແລະເພື່ອນຂອງລາວ** – ກິຈການ 10
**ລູກສິດຂອງອາຈານໂຢຮັນບັບຕິສະໂຕ** – ກິຈການ 19
**ເປົ້າໂລ** – I ໂກຣິນໂທ 14:18 & 39



**ພຣະ ວິນ ຍານ ບໍ ຣິ ສຸດ ແມ່ນ ເພື່ອ ສຳ ລັບ ທຸກໆ ຄົນ** **ກິຈການ 11:14-17**

# ຣິດ ເດດ ຂອງ ພຣະ ວິນ ຍານ ບໍ ຣິ ສຸດ



# ການສຶກສາພຣະຄັມຂອງພຣະເຈົ້າ




# ບົດຮຽນທີ່ ເກົ້າ

# ຂອງ ພຣະ ຣາຊ ທານ ຈາກ ພຣະ ວິນ ຍານ

I ໂກຣິນໂທ 12:1-10



# ຈາກ ຄົນ ຜູ້ ເກົ່າ ໄປ ສູ່ ຄົນ ຜູ້ ໃໝ່

ພວກທ່ານຈົ່ງຖອດຖິ້ມສະພາບມະນຸດເກົ່າຂອງຕົນຊຶ່ງຄູ່ກັບວິຖີຊີວິດເດີມນັ້ນເສັຽ ທີ່ກຳລັງເສື່ອມເສັຽໄປສູ່ຄວາມຕາຍຕາມຕັນຫາອັນເປັນທີ່ຫລອກລວງນັ້ນ
ແລະຈົ່ງໃຫ້ວິນຍານຈິດຂອງທ່ານຖືກຊົງຕັ້ງຂຶ້ນໃຫມ່ ແລະໃຫ້ທ່ານທັງຫລາຍສວມສະພາບມະນຸດໃຫມ່ ຊຶ່ງຊົງສ້າງຂຶ້ນໃຫມ່ຕາມແບບລັກສະນະຂອງພຣະເຈົ້າໃນຄວາມຊອບທັມແລະຄວາມບໍຣິສຸດທີ່ແທ້ຈິງ

ເອເຟໂຊ 4:22-24

**ຜົນຂອງພຣະວິນຍານ**




ກາລາເຕັຽ 5:19-21






ກາລາເຕັຽ 5:22-23

ການຫລິ້ນຊູ້ ການບໍ່ສະອາດ ການໂລພະຕັນຫາ ການໄຫວ້ພຣະທຽມ ການເຊື່ອເວດມົນຄາຖາ ການເປັນສັດຕຣູກັນ ການວິວາດຜິດຖຽງກັນ ການເຫິງສາກັນ ການຄຽດແຄ້ນກັນ ການໃຝ່ສູງຕໍ່ກັນ ການແຕກແຍກກັນ ການຖືພັກຖືພວກ ການອິດສາກັນ ການເສບສຸຣາຢາເມົາ ການກິນລ້ຽງຢ່າງວົ່ວວ້າ

ຄວາມຮັກ ຄວາມຍິນດີ ສັນຕິສຸກ ຄວາມອົດກັ້ນໄວ້ນານ ຄວາມປານີ ຄວາມດີ ຄວາມສັດຊື່ ຄວາມສຸພາບອ່ອນຫວານ ການຮູ້ຈັກບັງຄັບຕົນ

# ຄວາມ ສວຍ ງາມ ຂອງ ຄວາມ ບໍ ຣິ ສຸດ

ຈົ່ງຖວາຍພຣະສະງ່າຣາສີຊຶ່ງຄວນ
ແກ່ພຣະນາມຂອງພຣະອົງແດ່ພຣະເຈົ້າ
ຈົ່ງປະດັບກາຍດ້ວຍເຄື່ອງບໍຣິສຸດນະມັສ
ການພຣະເຈົ້າ **ເພງສັນລະເສີນ 29:2**

ເຫມືອນຢ່າງນັ້ນແຫລະ, ພວກທ່ານຈົ່ງສ່ອງ
ແຈ້ງແກ່ຄົນທັງປວງ ເພື່ອວ່າ, ເມື່ອເຂົາເຫັນ
ການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນ
ພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນ
ສວັນ **ມັດທາຍ 5:16**

ພວກທີ່ຮັກເອີຍ ເມື່ອພວກເຮົາມີພຣະສັນ
ຍາດັ່ງນັ້ນແລ້ວ ໃຫ້ເຮົາທັງຫລາຍຊໍາຣະຕົວ
ຈາກຮອຍເປື້ອນທຸກຢ່າງຂອງເນື້ອກາຍ
ແລະວິນຍານຈິດ ແລະຈົ່ງເຮັດໃຫ້ມີຄວາມ
ບໍຣິສຸດຢ່າງຄົບຖ້ວນໂດຍຄວາມຢໍາເກງ
ພຣະເຈົ້າ **II ໂກຣິນໂທ 7:1**

ຈົ່ງອົດສາພຍາຍາມທີ່ຈະຢູ່ຢ່າງສງົບສຸກ
ກັບຄົນທັງຫລາຍ ແລະອົດສາພຍາຍາມທີ່ຈະ
ໄດ້ໃຈບໍຣິສຸດ ຊຶ່ງຖ້າໃຈບໍ່ບໍຣິສຸດກໍຈະບໍ່ມີຜູ້ໃດ
ໄດ້ເຫັນອົງພຣະຜູ້ເປັນເຈົ້າ **ເຮັບເຣີ 12:14**



ຊີວິດຂອງພວກເຮົາຄວນເປັນສິ່ງສະທ້ອນເຖິງພຣະເຢຊູ

# ການສຶກສາພຣະຄັມຂອງພຣະເຈົ້າ




# ບົດຮຽນທີ່ ສິບ

# ຄຣິສ ຕະ ຈັກ ພຣະ ທັມ ຄັມ ພີ ໃໝ່

## ຄຣິສ ຕະ ຈັກ ໄດ້ ເຕີບ ຂຶ້ນ

3,000 ຄົນ (ກິຈການ 2:41) • 5,000 ຄົນ (ກິຈການ 4:4) • ຄົນຈຳນວນຫຼາຍ (ກິຈການ 5:14) • ພວກປະໂລຫິດຈຳນວນຫຼວງຫຼາຍ (ກິຈການ 6:7)

### *ໃນການຮ່ວມໃຈກັນ*



ແລະເຂົາໄດ້ຫມັ້ນຄົງຢູ່ໃນຄຳສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່ ແລະໃນການໄຫວ້ອອນ

**ກິຈການ 2:42**

### *ການອັສຈັນເທື່ອທຳອິດໃນຄຣິສຕະຈັກ*



ເຂົາໄດ້ໂດດຍືນຂຶ້ນຍ່າງໄປມາ ແລ້ວເຂົ້າໄປໃນບໍຣິເວນພຣະວິຫານພ້ອມກັນກັບທ່ານທັງສອງ ຍ່າງແລະເຕັ້ນພ້ອມສັຣເສີນພຣະເຈົ້າໄປ

**ກິຈການ 3:8**

### *ບາຣະນາບາຊີ້ໃຫ້ເຫັນແນວທາງ*



ກໍໄດ້ຂາຍນາຊອງຕົນທີ່ງນຶ່ງ ແລ້ວນຳເງິນຈຳນວນນັ້ນມາມອບໃຫ້ແກ່ພວກອັຄສາວົກ

**ກິຈການ 4:37**

# ຄຣິສ ຕະ ຈັກ ຖືກ ຂົ່ມ ເຫັງ



ແລ້ວເຂົາໄດ້ລາກທ່ານອອກໄປຈາກ
ກຸງ ແລະຄວ່າງກ້ອນຫີນໃສ່ ຝ່າຍຄົນທັງ
ຫລາຍທີ່ເປັນພຍານຕໍ່ຊະເຕຟາໂນກໍປົດ
ເສື້ອຂອງຕົນໄວ້ໃກ້ຕີນຂອງຊາຍຫນຸ່ມຜູ້
ນຶ່ງຊື່ໂຊໂລ ກິຈການ 7:58

ໂຊໂລເຫັນດີດ້ວຍໃນການຕາຍຂອງຊະເຕຟາໂນ
ກິຈການ 8:1

ໂຊໂລຂົ່ມເຫັງຄຣິສຕະຈັກຢ່າງຮຸນແຮງ
ກິຈການ 8:3

ໂຊໂລຈຶ່ງລົ້ມລົງເທິງດິນ ແລະໄດ້ຍິນ
ພຣະສຸຣະສຽງອັນນຶ່ງດັງມາວ່າ, “ໂຊໂລ,
ໂຊໂລເອີຍ, ເປັນຫຍັງເຈົ້າຈຶ່ງຂົ່ມເຫັງ
ເຮົາ?” ກິຈການ 9:4



ຊະເຕຟາໂນຖືກຄວ່າງດ້ວຍຫີນ
ກິຈການ 7:54-60

ການກັບໃຈເຊື່ອຂອງໂຊໂລ
ກິຈການ 9:1-31

# ຂ່າວ ປະ ເສີດ ແກ່ ຄົນ ຕ່າງ ຊາດ / ເປໂຕ

ຢູ່ມາວັນນຶ່ງປະມານເກົ້າໂມງ ທ່ານໄດ້ເຫັນນິມິດຄັກ ຄືເຫັນເທວະດາຕົວນຶ່ງຂອງພຣະເຈົ້າເຂົ້າມາຫາຕົນກ່າວວ່າ, “ໂກເນລີໂອເອີຍ”

*ກິຈການ* **10:3**



*ໂກເນລີໂອນແລະເທວະດາ*

ຕົກມື້ຫນ້າມາ, ເມື່ອເຂົາກຳລັງເດີນທາງໄປໃກ້ຈະເຖິງເມືອງຢົບປານັ້ນ, ຝ່າຍເປໂຕໄດ້ຂຶ້ນເມືອເທິງຫລັງຄາຕຶກເພື່ອໄຫວ້ວອນເປັນເວລາປະມານຫົກໂມງ ທ່ານກໍເກີດຫິວຢາກຮັບປະທານອາຫານ ແຕ່ໃນລະຫວ່າງທີ່ເຂົາກຳລັງຈັດອາຫານຢູ່ນັ້ນ ເປໂຕກໍລືມຄຶງໄປ

*ກິຈການ* **10:9-10**



*ເປໂຕຢູ່ເທິງຫລັງຄາຕຶກ*

ສ່ວນເປໂຕຈຶ່ງອອກປາກວ່າ, “ຂ້າພະເຈົ້າສັງເກດຮູ້ຄັກແນ່ວ່າ ພຣະເຈົ້າບໍ່ຊົງເລືອກຫນ້າຜູ້ໃດ ແຕ່ໃນທຸກຊາດຜູ້ໃດທີ່ຢຳເກງພຣະອົງ ແລະປະຕິບັດຖືກຕາມສິນທັມກໍເປັນທີ່ຊອບພຣະທັຍພຣະອົງ

*ກິຈການ* **10:34-35**



*ຄົນຕ່າງຊາດໄດ້ຮັບພຣະວິນຍານບໍຣິສຸດ*

# ຂ່າວ ປະ ເສີດ ແກ່ ຄົນ ຕ່າງ ຊາດ / ເປົາໂລ




*ເປໂຕທີ່ກຸງອາແຖນ*

ຝ່າຍໂປໂລກັບບາຣະນາບາມີໃຈກ້າ
ໄດ້ກ່າວວ່າ, "ຈຳເປັນທີ່ຈະຕ້ອງກ່າວພຣະ
ທັມຂອງພຣະເຈົ້າໃຫ້ທ່ານທັງຫລາຍຟັງ
ກ່ອນ ແຕ່ຍ້ອນທ່ານທັງຫລາຍປັດຖິ້ມ
ພຣະທັມນັ້ນ ແລະຖືວ່າຕົວບໍ່ສົມຄວນ
ກັບຊີວິດອັນຕລອດໄປເປັນນິດ ດັ່ງນີ້ເຮົາ
ກໍ່ປິ່ນຫນ້າໄປຫາພວກຕ່າງຊາດ
ກິຈການ 13:46




*ເປົາໂລຢູ່ໃນຄຸກ*

# ການສຶກສາພຣະຄັມຂອງພຣະເຈົ້າ




## ບົດຮຽນທີ່ ສິບເອັດ

# ເມືອງ ເຢ ຣູ ຊາ ເລັມ ຖືກ ທຳ ລາຍ

ດ້ວຍວ່າເວລາຈະມາເຖິງເຈົ້າ ເມື່ອ
ສັດຕຣູຂອງເຈົ້າຈະຂຸດຄູອ້ອມເຈົ້າ
ແລະຈະຕັ້ນເຈົ້າໄວ້ທຸກດ້ານ
ແລ້ວເຂົາຈະທຳລາຍເຈົ້າກັບບັນດາ
ລູກທັງຫລາຍທີ່ຢູ່ນຳເຈົ້າໃຫ້ລົງພຽງ
ດິນ ແລະເຂົາຈະບໍ່ໃຫ້ກ້ອນຫີນຊ້ອນ
ທັບກັນໄວ້ພາຍໃນເຈົ້າ ເພາະເຈົ້າບໍ່ໄດ້
ຮູ້ເວລາຂອງການຊົງຢ້ຽມຢາມເຈົ້າ”
ລູກາ 19:43-44

ເມືອງເຢຣູຊາເລັມຖືກທຳລາຍດ້ວຍກອງທັບຂອງ ຕີໂຕ ( ຫຼ.ຄ. 70)



# ຊາວ ຢິວ ກັບ ສູ່ ປະ ເລັດ ຕີນ

ພຣະອົງຈະຊົງຍົກເຄື່ອງຫມາຍນັ້ນຂຶ້ນ
ໃຫ້ແກ່ບັນດາປະຊາຊາດ ແລະຈະຊຸມນຸມ
ອິສຣາເອນທີ່ພັດພາກ ແລະຮອບຮ່ວມຢູ
ດາທີ່ກະຈັດກະຈາຍຈາກສີ່ມຸມແຫ່ງແຜ່ນ
ດິນໂລກ ເອຊາຢາ 11:12




ຢ່າສູ່ຢ້ານ ເພາະວ່າເຮົາຈະຢູ່ນຳເຈົ້າ ເຮົາຈະ
ໂຮມເອົາຍາດຕິເຊື້ອສາຍຂອງເຈົ້າມາຈາກ
ທິດຕາເວັນອອກແລະຕາເວັນຕົກ
ເຮົາຈະບອກໃຫ້ທິດເຫນືອປ່ອຍເຂົາໄປ ແລະ
ບອກບໍ່ໃຫ້ທິດໃຕ້ຫນ່ວງຫນ່ຽວເຂົາໄວ້ ຈົ່ງ
ປ່ອຍໃຫ້ໄພ່ພົນຂອງເຮົາມາແຕ່ທີ່ໄກເສັ້ງ ຄື
ມາຈາກທຸກພາກສ່ວນຂອງໂລກ
ເອຊາຢາ 43:5-6

ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະໃຫ້ເຈົ້າພົບ
ເຮົາ ແລະເຮົາຈະໃຫ້ເຈົ້າກັບສູ່ສະພາບດີແລະ
ຮວບຮວມເຈົ້າມາຈາກບັນດາປະຊາຊາດ
ແລະຈາກທຸກບ່ອນທີ່ເຮົາຂັບໄລ່ເຈົ້າໃຫ້ໄປຢູ່
ນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ແລະ
ເຮົາຈະນຳເຈົ້າກັບມາຍັງທີ່ຊຶ່ງເຮົາເນລະເທດ
ເຈົ້າໃຫ້ຈາກໄປນັ້ນ ເຢເລມີຢາ 29:14

## ອິສຣາເອນໄດ້ສະຖາປານາປະເທດຂຶ້ນ

**ພຶສພາ 15, 1948**

# ສະ ໄໝ ຂອງ ພວກ ຕ່າງ ຊາດ

## ຄວາມຝັນຂອງກະສັດ
## ເນບູກາດເນັດສາ



ຫົວ ເປັນຄໍາ ( ຈັກກະພັດ ບາບີໂລເນັຍ )

ເອິກແລະແຂນ ເປັນເງິນ (ຈັກກະພັດ ເມໂດ-ເປີເຊັຍ )

ເອວແລະກົ້ນ ເປັນທອງ (ຈັກກະພັດ ກຣີກ )

ຂາ ເປັນເຫຼັກ (ຈັກກະພັດ ໂຣມ )

ຕີນສ່ວນໜຶ່ງເປັນເຫຼັກສ່ວນໜຶ່ງເປັນດິນໜຽວ
(ການຟື້ນຄືນຂອງຈັກກະພັດໂຣມ)

ກ້ອນຫີນ
( ພຣະເຢຊູຄຣິສ)

ຂ້າແດ່ພຣະຣາຊາ ໃນນິມິດຂອງພຣະອົງນັ້ນ ພຣະອົງໄດ້ທອດພຣະເນດເຫັນຮູບຂນາດໃຫຍ່ຢືນຢູ່ຊ້ອງພຣະພັກ ຮູບນີ້ສ່ອງແສງເຫລື້ອມ ແລະເປັນຕາຢ້ານ
ຫົວຂອງຮູບນີ້ເປັນຄໍາຢ່າງດີທີ່ສຸດ ເອິກແລະແຂນເປັນເງິນ ແອວແລະກະໂພກເປັນທອງສໍາລິດ
ຂາເປັນເຫລັກ ຕີນເປັນເຫລັກປົນດິນ **ດານີເອນ 2:31-33**

ພຣະອົງຊົງກ່າວວ່າ, "ພຣະເຈົ້າຂອງທ່ານຊົງເປັນພຣະເຈົ້າຂອງພຣະ ແລະຂອງພຣະຣາຊາທັງປວງ ແລະຊົງເປັນຜູ້ເຜີຍຄວາມເລິກລັບ ເພາະວ່າທ່ານສາມາດອະທິບາຍຄວາມເລິກລັບນີ້ໄດ້"
**ດານີເອນ 2:47**

# ສິ່ງ ທີ່ ສະ ແດງ ໃຫ້ ເຫັນ ເຖິງ ຍຸກ ສຸດ ທ້າຍ



# ພຣະເຢຊູສະເດັດມາເພື່ອຄຣິສຕະຈັກຂອງພຣະອົງ



ດ້ວຍວ່າຈະມີຄຳສັ່ງອັນດັງ ຈະມີສຽງຂອງ
ອັຄເທວະດາ ແລະສຽງແກຂອງພຣະເຈົ້າ
ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາ,
ຈາກສວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່
ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ
ຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງ
ເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມ
ກັນກັບຄົນພວກນັ້ນ ແລະຈະພົບອົງພຣະ
ຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ,
ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນ
ນິດ

I ເທຊະໂລນິກ 4:16-17

ມັດທາຍ 24:44 I ໂກຣິນໂທ 15:51-54 I ເທຊະໂລນິກ 4:13-17

# ການສຶກສາພຣະຄັມຂອງພຣະເຈົ້າ




## ບົດຮຽນທີ່ ສິບສອງ

# ຄວາມລຳບາກຍາກແຄ້ນອັນຮ້າຍແຮງ




7 ກາປະທັບຕາ
ພຣະນິມິດ 6 & 8:1

7 ເທວະດາກັບສຽງແກ
ພຣະນິມິດ 6 & 9

7 ເທວະດາກັບຂັນ
ພຣະນິມິດ 16




445 ກ. ຄ.

ການເປັນສະເລີຍ
ເສັກທີ່ບາບີໂລນ

ຫົກສິບເກົ້າອາທິດຂອງດານີເອນ

7 ອາທິດ (49 ປີ)
ການກໍ່ສ້າງເຢຣຊາເລັມຄືນໃໝ່

62 ອາທິດ (434 ປີ)
ຈົນເຖິງການຕຶງພຣະຜູ້ຊອຍ

ສມັຍຂອງຄຣິສຕະຈັກ
(ດານີເອນບໍ່ເຫັນສມັຍ
ຂອງຄຣິສຕະຈັກ)

ຮັບຂຶ້ນສູ່ສະຫວັນ

ອາທິດທີ່ເຈັດສິບ
ຂອງດານີເອນ
7 ປີ
ຄວາມລຳບາກອັນຮ້າຍແຮງ

1000 ປີ

# ການ ປົກ ຄອງ ຜູ້ ທີ່ ຕໍ່ ຕ້ານ ພຣະ ຄຣິສ




ຢ່າໃຫ້ໃຜຫລອກລວງເຈົ້າທັງຫລາຍດ້ວຍທາງ
ນຶ່ງທາງໃດ ເພາະວ່າວັນນັ້ນຈະບໍ່ຫູ້ນມາເຖິງ
ຈົນກວ່າຈະມີການທໍຣະຍົດເກີດຂຶ້ນເສັຽກ່ອນ
ແລະຜູ້ຊົ່ວຮ້າຍນັ້ນຈະອອກມາປາກົດຄືຜູ້ຖືກ
ຊົງຫມາຍໄວ້ສຳລັບຄວາມວິນາດຈິບຫາຍ
ຄືຜູ້ຄັດຄ້ານ ແລະຍົກຕົວຂຶ້ນຕໍ່ສູ້ທຸກໆສິ່ງທີ່ມີ
ຊື່ວ່າເປັນພຣະ ຫລືທີ່ເຂົາໄຫວ້ນະມັສການນັ້ນ
ມັນຈຶ່ງຈະໄດ້ນັ່ງລົງໃນພຣະວິຫານຂອງພຣະ
ເຈົ້າ.... **II ເທຊະໂລນິກ 2:3-4**

**ລະບົບການປົກຄອງອັນດຽວ ຈະຢູ່ໃຕ້ການຄວບຄຸມຂອງຜູ້ທີ່ຕໍ່ຕ້ານພຣະຄຣິສ**

ພຣະນິມິດ 13 ໄດ້ບອກກ່ຽວກັບຜູ້ທີ່ຕໍ່ຕ້ານພຣະຄຣິສຄື(ສັດຮ້າຍ)ຊຶ່ງອອກມາຈາກມະຫາສະມຸດ.

# ສະ ນາມ ຣົບ ອາ ມາ ເຄ ໂດນ

**144,000 ຄົນຮັບການປະທັບຕາ**

ພຣະນິມິດ 7

ດ້ວຍວ່າຜີເຫລົ່ານັ້ນເປັນຜີຮ້າຍທີ່ເຮັດຫມາຍສຳຄັນ ມັນອອກໄປຫາກະສັດທັງຫລວາຍທົ່ວພິພົບ ເພື່ອໃຫ້ກະສັດເຫລົ່ານັ້ນມາຮ່ວມກັນສຳລັບການສົງຄວາມ ໃນວັນອັນໃຫຍ່ຫລວງຂອງພຣະເຈົ້າ ຜູ້ຊົງຣິດທານຸພາບສູງສຸດແລະຜີທັງສາມໂຕນັ້ນໄດ້ໃຫ້ກະສັດທັງຫລາຍມາຊຸມນຸມກັນໃນບ່ອນນຶ່ງ ຕາມພາສາເຮັບເຣີເອີ້ນວ່າ ອາມາເຄໂດນ

**ພຣະນິມິດ 16:14 & 16**




ແລ້ວຂ້າພຸະເຈົ້າໄດ້ເຫັນສວັນໄຂອອກ ແລະດັ່ງນີ້ ມີມ້າຂາວໂຕນຶ່ງ ພຣະອົງຜູ້ປະທັບເທິງຫລັງມ້ານັ້ນຊົງພຣະນາມວ່າ “ສັດຊື່” ແລະ “ທ່ຽງແທ້” ພຣະອົງຊົງພິພາກສາແລະທຳເສິກດ້ວຍຄວາມຍຸດຕິທັມ

**ພຣະນິມິດ 19:11**

# ການ ສະ ເດັດ ກັບ ມາ ຂອງ ພຣະ ຄຣິສ ແລະ ສະ ມັຍ 1000 ປີ



ກອງທັບຜູ້ທີ່ຕໍ່
ຕານພຣະຄ້ຣິສ
ຖືກທຳລາຍ



ໃນວັນນັ້ນພຣະບາດຂອງພຣະອົງຈະຢືນຢູ່ທີ່ພູເຂົາຫມາກກອກເທດ ຊຶ່ງຢູ່ຫນ້າເມືອງເຢຣູຊາເລັມດ້ານຕາເວັນອອກ ແລະພູເຂົາຫມາກກອກເທດນັ້ນຈະແຍກອອກເປັນສອງສ່ວນຈາກທິດຕາເວັນອອກໄປທິດຕາເວັນຕົກ ໂດຍມີຫຸບເຂົາອັນກວ້າງຂວາງຢູ່ຫວ່າງກາງ ພູເຂົາເຄິ່ງນຶ່ງຈຶ່ງຈະເຄື່ອນໄປທາງເຫນືອ …. **ເສກາລິຢາ 14:4**

ແລະພຣະຜູ້ເປັນເຈົ້າຈະຊົງເປັນກະສັດເຫນືອພິພົບທັງສິ້ນ ໃນວັນນັ້ນພຣະຜູ້ເປັນເຈົ້າຈະຊົງເປັນເອກ ແລະພຣະນາມຂອງພຣະອົງກໍເປັນເອກ **ເສກາລິຢາ 14:9**

**ພຣະເຢຊູຈະປົກຄອງແຜ່ນດິນໂລກ**
**1000 ປີ**

**ພຣະນິມິດ 20:6**

**ຊາຕານຈະຖືກຜູກມັດ**
**ໄວ້ໃນລະຍະເວລາ**
**1000 ປີ**

**ພຣະນິມິດ 20:2-3**

# ພຣະບັນລັງອັນໃຫຍ່ສີຂາວແລະການພິພາກສາ

ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ
ທັງຜູ້ໃຫຍ່ແລະຜູ້ນ້ອຍ ຢືນຢູ່ຕໍ່ຫນ້າພຣະຣາ
ຊບັນລັງນັ້ນ ແລະຫນັງສືຕ່າງໆກໍໄຂອອກ ມີ
ຫນັງສືອີກເຫລັ້ມນຶ່ງກໍໄຂອອກ ຄືທະບຽນ
ແຫ່ງຊີວິດ ແລະຄົນທັງຫລາຍທີ່ຕາຍແລ້ວກໍ
ຖືກຊົງພິພາກສາ ຕາມການປະຕິບັດຂອງ
ເຂົາທີ່ຂຽນໄວ້ໃນຫນັງສືເຫລົ່ານັ້ນ

**ພຣະນິມິດ 20:12**

ຖ້າຜູ້ໃດບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີ
ວິດ ຜູ້ນັ້ນກໍຖືກຖິ້ມລົງໃນບຶງໄຟ

**ພຣະນິມິດ 20:15**



# ເວ ລາ ສິ້ນ ສຸດ – ແລ້ວ ຊີ ວິດ ນິ ຣັນ ດອນ



ທ້ອງຟ້າແລະແຜ່ນດິນ
ໂລກໄດ້ຖືກທຳລາຍ
II ເປໂຕ 3:10



ທ້ອງຟ້າໃໝ່ແລະ
ແຜ່ນດິນໃໝ່
II ເປໂຕ 3:10
ພຣະນິມິດ 21:1

ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່
ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກພວກ
ທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳ
ລັບທ່ານທັງຫລາຍ
ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກ
ທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່
ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່
ນັ້ນເຫມືອນກັນ ໂຢຮັນ **14:2-3**



ເມືອງເຢຣູຊາເລັມໃໝ່

ພຣະນິມິດ 21

ພຣະອົງຜູ້ຊົງເປັນພຍານໃນເຫດການ
ເຫລົ່ານີ້ຊົງກ່າວວ່າ, "ແນ່ນອນ ເຮົາຈະມາ
ໃນໄວໆນີ້" "ອາແມນ ພຣະເຢຊູເຈົ້າ ເຊີນສະ
ເດັດມາເທີ້ນ" ຂໍໃຫ້ພຣະຄຸນແຫ່ງພຣະເຢ
ຊູຄຣິດເຈົ້າ ຈົ່ງສະຖິດຢູ່ນຳຄົນທັງປວງ
ເທີນ ພຣະນິມິດ **22:20-21**